ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 258/ລບ

ນະຄອນຫຼວງວຽງຈັນ, ວັນທີ 24.08.2017

# ດຳລັດ
# ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເຄມີ ສະບັບເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016;
- ອີງຕາມໜັງສືສະເໜີ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0482/ກປ, ລົງວັນທີ 12 ພຶດສະພາ 2017.

## ລັດຖະບານ ອອກດຳລັດ:
## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ນຳໃຊ້ ແລະ ການຕິດຕາມ ກວດກາ ການເຄື່ອນໄຫວວຽກງານຢາປາບສັດຕູພືດ ເພື່ອຮັບປະກັນຄຸນນະພາບ, ປະສິດທິພາບ ແລະ ຄວາມປອດໄພຂອງຢາປາບສັດຕູພືດ ຕໍ່ ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ແນໃສ່ເຮັດໃຫ້ ການຜະລິດກະສິກຳ ແລະ ປ່າໄມ້ ໄປຕາມທິດກະສິກຳ ສະອາດ ສີຂຽວ ຍືນຍົງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2 ການຄຸ້ມຄອງຢາປາບສັດຕູພືດ**

ການຄຸ້ມຄອງຢາປາບສັດຕູພືດ ແມ່ນ ການຈັດຕັ້ງປະຕິບັດມາດຕະການ ກ່ຽວກັບການນຳໃຊ້ ແລະ ດຳເນີນທຸລະກິດ ຢາປາບສັດຕູພືດ ໃຫ້ຖືກຕ້ອງຕາມເຕັກນິກວິຊາການ ເພື່ອຮັບປະກັນຄວາມປອດໄພ ຕໍ່ ສຸຂະພາບ, ຊີວິດ, ຊັບສິນ, ສິ່ງແວດລ້ອມ ແລະ ສັງຄົມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຢາປາບສັດຕູພືດ** ໝາຍເຖິງ ທາດ ຫຼື ທາດປະສົມເຄມີ ລວມທັງຊີວະພາບ ທີ່ນຳໃຊ້ ເພື່ອ ຂັບໄລ່, ທຳລາຍ, ຄວບຄຸມສັດຕູພືດ ແລະ ພາຫະນຳເຊື້ອພະຍາດ ຫຼື ເພື່ອຄວບຄຸມ ການຈະເລີນເຕີບໂຕຂອງ ພືດ;

2. **ສັດຕູພືດ** ໝາຍເຖິງ ພືດທີ່ບໍ່ຕ້ອງການ, ແມງໄມ້, ສັດ ແລະ ເຊື້ອຈຸລິນຊີ ທີ່ສ້າງຄວາມເສຍຫາຍ ແກ່ພືດ, ຜະລິດຕະພັນພືດ ແລະ ສິ່ງແວດລ້ອມ;

3. **ການຂຶ້ນທະບຽນວິຊາການຢາປາບສັດຕູພືດ** ໝາຍເຖິງ ຂະບວນການຮັບຮອງເອົາຢາປາບສັດຕູ ພືດ ຕາມການປະເມີນຂໍ້ມູນທາງດ້ານວິທະຍາສາດ ໃຫ້ເຫັນວ່າຜະລິດຕະພັນນັ້ນມີປະສິດທິພາບ ຕໍ່ເປົ້າໝາຍ ແລະ ບໍ່ມີຄວາມສ່ຽງຕໍ່ສຸຂະພາບຂອງຄົນ ຫຼື ສັດ ຫຼື ສິ່ງແວດລ້ອມ ພາຍໃຕ້ເງື່ອນໄຂຂອງສະຖານທີ່ນຳໃຊ້;

4. **ເຊື້ອຈຸລິນຊີ** ໝາຍເຖິງ ໄວຣັດ, ແບັກທີເຣຍ, ເຫັດລາ, ກາຝາກ ແລະ ເຊື້ອພະຍາດອື່ນ;

5. **ພາຫະນຳເຊື້ອພະຍາດ** ໝາຍເຖິງ ສິ່ງທີ່ມີຊີວິດໃດໜຶ່ງ ທີ່ເປັນຕົວນຳພາເຊື້ອພະຍາດຕິດແປດ ມາສູ່ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ ເປັນຕົ້ນ ສັດ, ພືດ, ແມງສາບ, ຍຸງ;

6. **ຢາປາບສັດຕູພືດທີ່ຫ້າມນຳໃຊ້** ໝາຍເຖິງ ຢາປາບສັດຕູພືດ ຊຶ່ງຖືກຫ້າມຜະລິດ, ນຳເຂົ້າ, ຈຳໜ່າຍ, ນຳໃຊ້ ແລະ ການເຄື່ອນໄຫວອື່ນ ເພື່ອປົກປ້ອງສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ ລວມ ທັງຢາປາບສັດຕູພືດທີ່ຖືກຍົກເລີກ ແລະ ລຶບຊື່ອອກຈາກບັນຊີອະນຸຍາດນຳໃຊ້ ໃນ ສປປ ລາວ;

7. **ຢາປາບສັດຕູພືດປອມ** ໝາຍເຖິງ ຜະລິດຕະພັນທີ່ຜະລິດ ແລະ ຫຸ້ມຫໍ່ຄ້າຍຄືກັບຜະລິດຕະພັນທີ່ ໄດ້ຂຶ້ນທະບຽນແລ້ວ ແຕ່ມີສ່ວນປະກອບ, ທາດພິດ, ເຄື່ອງໝາຍການຄ້າ ຫຼື ອາຍຸການນຳໃຊ້ບໍ່ກົງກັບສະຫຼາກ;

8. **ຢາປາບສັດຕູພືດທີ່ບໍ່ໄດ້ມາດຕະຖານ** ໝາຍເຖິງ ຜະລິດຕະພັນຢາປາບສັດຕູພືດ ທີ່ມີທາດພິດ ໜ້ອຍ ຫຼື ຫຼາຍກວ່າ, ມີສິ່ງເຈືອປົນ ຫຼື ຄຸນລັກສະນະອື່ນ ທີ່ບໍ່ຖືກຕ້ອງຕາມມາດຕະຖານທີ່ໄດ້ຂຶ້ນທະບຽນໄວ້;

9. **ຢາປາບສັດຕູພືດເສຍຄຸນລັກສະນະ** ໝາຍເຖິງ ຜະລິດຕະພັນຢາປາບສັດຕູພືດ ທີ່ໝົດອາຍຸ ການນຳໃຊ້ ຕາມທີ່ສະແດງໄວ້ໃນສະຫຼາກ ແລະ ເປັນຢາປາບສັດຕູພືດ ທີ່ປ່ຽນສະພາບຈາກລັກສະນະເດີມ ເປັນຕົ້ນ ຈັບກັນເປັນກ້ອນ, ປ່ຽນສີ ແລະ ລັກສະນະອື່ນ;

10. **ສິ່ງເສດເຫຼືອຢາປາບສັດຕູພືດ** ໝາຍເຖິງ ສິ່ງເສດເຫຼືອຈາກຢາປາບສັດຕູພືດ ເປັນຕົ້ນ ພາຊະນະ ບັນຈຸ, ຢາປາບສັດຕູພືດຕົກຄ້າງ ແລະ ອຸປະກອນຮັບໃຊ້;

11. **ການບຳບັດຢາປາບສັດຕູພືດ** ໝາຍເຖິງ ຂະບວນການຫຼຸດຜ່ອນມົນລະພິດ ທີ່ເກີດຈາກ ການເຄື່ອນໄຫວວຽກງານຢາປາບສັດຕູພືດ ດ້ວຍການນຳໃຊ້ເຕັກນິກ, ເຄື່ອງຈັກ ຫຼື ວັດຖຸປະກອນຕ່າງໆ;

12. **ການກຳຈັດຢາປາບສັດຕູພືດ** ໝາຍເຖິງ ການຈູດ, ການຝັງ ຫຼື ນຳໃຊ້ວິທີການອື່ນ ເພື່ອທຳລາຍ ຫຼື ແຍກປ່ຽວສິ່ງເສດເຫຼືອຢາປາບສັດຕູພືດ;

13. **ສູດຢາປາບສັດຕູພືດ** ໝາຍເຖິງ ການປະສົມຈາກທາດ ຫຼື ວັດຖຸດິບຫຼາຍຊະນິດ ເພື່ອເຮັດໃຫ້ ຜະລິດຕະພັນ ມີປະສິດທິພາບ ຕາມເປົ້າໝາຍການນຳໃຊ້;

14. **ສານອອກລິດ** ໝາຍເຖິງ ສ່ວນປະກອບໃດໜຶ່ງຂອງຢາປາບສັດຕູພືດ ທີ່ເຮັດໃຫ້ຢາປາບສັດຕູ ພືດອອກລິດ ເພື່ອຂັບໄລ່, ທຳລາຍ, ຄວບຄຸມສັດຕູພືດ ແລະ ພາຫະນຳເຊື້ອພະຍາດ ຫຼື ຄວບຄຸມການຈະເລີນ ເຕີບໂຕຂອງພືດ;

15. **ສານພິດຕົກຄ້າງ** ໝາຍເຖິງ ສານປະກອບສະເພາະໃດໜຶ່ງຂອງຢາປາບສັດຕູພືດ ທີ່ຕົກຄ້າງຢູ່ໃນພືດ, ດິນ, ນ້ຳ, ອາຫານ, ສິນຄ້າກະສິກຳ, ອາຫານສັດ ທີ່ເກີນຄ່າມາດຕະຖານ ຕາມການກຳນົດຂອງອົງການຈັດຕັ້ງສາກົນ ຫຼື ລະບຽບການທີ່ກ່ຽວຂ້ອງ;

16. **ພາຊະນະບັນຈຸ** ໝາຍເຖິງ ຂວດ, ຕຸກ, ຖັງ, ຖົງ, ແກັດ, ທໍ່ ຫຼື ຊອງ ແລະ ສິ່ງອື່ນ ທີ່ນຳໃຊ້ບັນຈຸຢາປາບສັດຕູພືດ;

17. **ຢາປາບສັດຕູພືດຊີວະພາບ** ໝາຍເຖິງ ເຊື້ອຈຸລິນຊີ, ທາດລິນປິນເຄມີ-ຊີວະພາບ ແລະ ສານສະກັດຈາກພືດ ທີ່ນຳໃຊ້ເພື່ອຫຼຸດຜ່ອນປະຊາກອນຂອງສັດຕູພືດ;

18. **ການປ້ອງກັນພືດແບບປະສົມປະສານ** ໝາຍເຖິງ ການຄວບຄຸມສັດຕູພືດ ດ້ວຍການລວມເອົາວິທີການຕ່າງໆ ທີ່ເໝາະສົມ ໃນການສະກັດກັ້ນການຂະຫຍາຍຕົວຂອງປະຊາກອນສັດຕູພືດ ເພື່ອຫຼຸດຜ່ອນການນຳໃຊ້ຢາປາບສັດຕູພືດ ຫຼື ຫຼຸດຜ່ອນຄວາມສ່ຽງຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ ໂດຍເນັ້ນໃສ່ຫຼັກການປູກຝັງ ໃຫ້ພືດມີຄວາມຕ້ານທານ, ບໍ່ມີຜົນກະທົບຕໍ່ລະບົບນິເວດ ແລະ ຊຸກຍູ້ ກົນໄກການຄວບຄຸມສັດຕູພືດໂດຍທຳມະຊາດ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຢາປາບສັດຕູພືດ**

ລັດ ເອົາໃຈໃສ່ວຽກງານຢາປາບສັດຕູພືດ ດ້ວຍການບຳລຸງສ້າງບຸກຄະລາກອນ, ຄົ້ນຄວ້າ, ທົດລອງ, ພັດທະນາ ແລະ ຖ່າຍທອດເຕັກນິກວິຊາການ ກ່ຽວກັບຢາປາບສັດຕູພືດ ລວມທັງການກໍ່ສ້າງພື້ນຖານໂຄງລ່າງວັດຖຸເຕັກນິກ ຮັບປະກັນການຄຸ້ມຄອງວຽກງານດັ່ງກ່າວ ໃຫ້ມີປະສິດທິຜົນ.

ລັດ ຊຸກຍູ້ ແລະ ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລົງທຶນເຂົ້າໃນການດຳເນີນທຸລະກິດຢາປາບສັດຕູພືດທີ່ເປັນອັນຕະລາຍໜ້ອຍ, ຢາປາບສັດຕູພືດຊີວະພາບ ແລະ ນຳໃຊ້ເຕັກໂນໂລຊີ ທີ່ເປັນມິດຕໍ່ສິ່ງແວດລ້ອມ ເປັນຕົ້ນ ການປ້ອງກັນພືດແບບປະສົມປະສານ, ການປະຕິບັດກະສິກຳທີ່ດີ ດ້ວຍການສະໜອງຂໍ້ມູນຂ່າວສານ, ເຕັກນິກວິຊາການ ແລະ ນະໂຍບາຍ ພາສີ, ອາກອນ ຕາມກົດໝາຍ.

**ມາດຕາ 5 ຫຼັກການພື້ນຖານກ່ຽວກັບວຽກງານຢາປາບສັດຕູພືດ**

ຫຼັກການພື້ນຖານກ່ຽວກັບວຽກງານຢາປາບສັດຕູພືດມີ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ກົດໝາຍ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ເອົາການປ້ອງກັນພືດເປັນສຳຄັນ ໂດຍການນຳໃຊ້ຢາປາບສັດຕູພືດທີ່ເປັນເຄມີ ເທົ່າທີ່ຈຳເປັນຕາມເຕັກນິກການປ້ອງກັນພືດແບບປະສົມປະສານ;
4. ຮັບປະກັນຄວາມປອດໄພຕໍ່ສຸຂະພາບ ຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ;
5. ຮັບປະກັນຄວາມຖືກຕ້ອງ ຕາມມາດຕະຖານເຕັກນິກ;
6. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານ ກ່ຽວກັບການນຳເຂົ້າ, ຜະລິດ, ຈຳໜ່າຍ, ຂົນສົ່ງ, ສົ່ງຜ່ານ, ສົ່ງອອກ, ການນຳໃຊ້,

ການໂຄສະນາ, ການບຳບັດ, ການກຳຈັດ, ການຄົ້ນຄວ້າວິໄຈ ແລະ ດຳເນີນທຸລະກິດ ຢາປາບສັດຕູພືດ ໃນ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຢາປາບສັດຕູພືດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ການພັດທະນາຊັບພະຍາກອນມະນຸດ, ການປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ປະເພດ ແລະ ບັນຊີຢາປາບສັດຕູພືດ

**ມາດຕາ 8 ປະເພດຢາປາບສັດຕູພືດ**

ຢາປາບສັດຕູພືດ ໄດ້ແບ່ງເປັນ ປະເພດຕາມລະດັບຄວາມເປັນອັນຕະລາຍ ດັ່ງນີ້:

1. ຢາປາບສັດຕູພືດອັນຕະລາຍຮ້າຍແຮງສູງ;
2. ຢາປາບສັດຕູພືດອັນຕະລາຍຮ້າຍແຮງ;
3. ຢາປາບສັດຕູພືດອັນຕະລາຍປານກາງ;
4. ຢາປາບສັດຕູພືດອັນຕະລາຍໜ້ອຍ;
5. ຢາປາບສັດຕູພືດອັນຕະລາຍບໍ່ມີພິດກະທັນຫັນ.

ລາຍລະອຽດກ່ຽວກັບຢາປາບສັດຕູພືດແຕ່ລະປະເພດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 9 ຢາປາບສັດຕູພືດທີ່ເປັນອັນຕະລາຍຮ້າຍແຮງສູງ**

ຢາປາບສັດຕູພືດທີ່ເປັນອັນຕະລາຍຮ້າຍແຮງສູງ ແມ່ນຢາປາບສັດຕູພືດທີ່ມີຄຸນລັກສະນະຄວາມເປັນພິດກະທັນຫັນ ຕໍ່ສຸຂະພາບ ແລະ ຊີວິດຂອງຄົນ, ນອກນີ້ຍັງສົ່ງຜົນກະທົບຮ້າຍແຮງ ຕໍ່ສິ່ງແວດລ້ອມ ແລະ ຕົກຄ້າງຍາວນານ, ຈາກຜົນໄດ້ຮັບທີ່ເຮັດໃຫ້ຈຳນວນສັດທົດລອງຕາຍ ຫ້າສິບສ່ວນຮ້ອຍ ເມື່ອໄດ້ຮັບທາດພິດຂອງຢາປາບສັດຕູພືດເຂົ້າທາງປາກໃນປະລິມານ ໜ້ອຍກວ່າ ຫ້າມິນລີກຣາມ ຫຼື ເຂົ້າທາງຜິວໜັງ ໜ້ອຍກວ່າ ຫ້າສິບ ມິນລີກຣາມ ຕໍ່ນ້ຳໜັກຂອງສັດທົດລອງ ໜຶ່ງກິໂລກຣາມ.

ຢາປາບສັດຕູພືດທີ່ເປັນອັນຕະລາຍຮ້າຍແຮງສູງ ບໍ່ອະນຸຍາດໃຫ້ ຜະລິດ, ນຳເຂົ້າ, ຈຳໜ່າຍ, ສົ່ງຜ່ານ, ນຳໃຊ້ ແລະ ຄອບຄອງ.

**ມາດຕາ 10 ຢາປາບສັດຕູພືດທີ່ເປັນອັນຕະລາຍຮ້າຍແຮງ**

ຢາປາບສັດຕູພືດອັນຕະລາຍຮ້າຍແຮງ ແມ່ນຢາປາບສັດຕູພືດທີ່ມີຄຸນລັກສະນະຄວາມເປັນພິດກະທັນຫັນ ຕໍ່ສຸຂະພາບ ແລະ ຊີວິດຂອງຄົນ, ນອກນີ້ຍັງສົ່ງຜົນກະທົບຮ້າຍແຮງ ຕໍ່ສິ່ງແວດລ້ອມ ແລະ ຕົກຄ້າງຍາວນານ ຈາກຜົນໄດ້ຮັບທີ່ເຮັດໃຫ້ຈຳນວນສັດທົດລອງຕາຍ ຫ້າສິບສ່ວນຮ້ອຍ ເມື່ອໄດ້ຮັບທາດພິດຂອງຢາປາບສັດຕູພືດເຂົ້າທາງປາກໃນປະລິມານ ຫ້າ ຫາ ຫ້າສິບມິນລີກຣາມ ຫຼື ເຂົ້າທາງຜິວໜັງ ຫ້າສິບ ຫາ ສອງຮ້ອຍ ມິນລີກຣາມ ຕໍ່ນ້ຳໜັກຂອງສັດທົດລອງ ໜຶ່ງກິໂລກຣາມ.

ຢາປາບສັດຕູພືດອັນຕະລາຍຮ້າຍແຮງ ບໍ່ອະນຸຍາດໃຫ້ ຜະລິດ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ຈຳໜ່າຍ, ນຳໃຊ້ ແລະ ຄອບຄອງ ຍົກເວັ້ນນຳໃຊ້ເພື່ອການຄົ້ນຄວ້າ ແລະ ການພັດທະນາເຕັກໂນໂລຊີ ຂອງລັດຖະບານ, ການປ້ອງກັນ ແລະ ຄວບຄຸມສັດຕູພືດກັກກັນ ຫຼື ພາຫະນຳເຊື້ອພະຍາດ, ແຕ່ຕ້ອງໄດ້ຂຶ້ນທະບຽນ ແລະ ຮັບອະນຸຍາດ ນຳກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 11 ຢາປາບສັດຕູພືດທີ່ເປັນອັນຕະລາຍປານກາງ**

ຢາປາບສັດຕູພືດທີ່ເປັນອັນຕະລາຍປານກາງ ແມ່ນຢາປາບສັດຕູພືດທີ່ມີຄຸນລັກສະນະເປັນພິດ ຕໍ່ສຸຂະພາບ ແລະ ຊີວິດຂອງຄົນ ຈາກຜົນໄດ້ຮັບທີ່ເຮັດໃຫ້ຈຳນວນສັດທົດລອງຕາຍ ຫ້າສິບສ່ວນຮ້ອຍ ເມື່ອໄດ້ຮັບທາດພິດຂອງຢາປາບສັດຕູພືດເຂົ້າທາງປາກໃນປະລິມານ ຫ້າສິບ ຫາ ສອງພັນມິນລີກຣາມ ຫຼື ເຂົ້າທາງຜິວໜັງ ສອງຮ້ອຍ ຫາ ສອງພັນມິນລີກຣາມ ຕໍ່ນ້ຳໜັກຂອງສັດທົດລອງ ໜຶ່ງກິໂລກຣາມ.

ຢາປາບສັດຕູພືດອັນຕະລາຍປານກາງ ສາມາດຜະລິດ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ຈຳໜ່າຍ, ນຳໃຊ້ ແລະ ຄອບຄອງ ໂດຍຂຶ້ນທະບຽນ ແລະ ຂໍອະນຸຍາດນຳຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງຕາມລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**ມາດຕາ 12 ຢາປາບສັດຕູພືດທີ່ເປັນອັນຕະລາຍໜ້ອຍ**

ຢາປາບສັດຕູພືດທີ່ເປັນອັນຕະລາຍໜ້ອຍ ແມ່ນຢາປາບສັດຕູພືດທີ່ມີຄຸນລັກສະນະເປັນພິດ ຕໍ່ສຸຂະພາບ ແລະ ຊີວິດຂອງຄົນ ຈາກຜົນໄດ້ຮັບທີ່ເຮັດໃຫ້ສັດທົດລອງຕາຍ ຫ້າສິບສ່ວນຮ້ອຍ ເມື່ອໄດ້ຮັບທາດພິດຂອງຢາປາບສັດຕູພືດເຂົ້າທາງປາກ ຫຼື ຜິວໜັງ ໃນປະລິມານ ຫຼາຍກວ່າ ສອງພັນມິນລີກຣາມ ຕໍ່ນ້ຳໜັກຂອງສັດ ໜຶ່ງກິໂລກຣາມ.

ຢາປາບສັດຕູພືດທີ່ເປັນອັນຕະລາຍໜ້ອຍ ສາມາດຜະລິດ, ນຳເຂົ້າ, ຈຳໜ່າຍ, ສົ່ງຜ່ານ, ສົ່ງອອກ, ນຳໃຊ້ ແລະ ຄອບຄອງ ໂດຍຂຶ້ນທະບຽນ ແລະ ຂໍອະນຸຍາດ ນຳອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ແລະ ຕ້ອງປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

**ມາດຕາ 13 ຢາປາບສັດຕູພືດອັນຕະລາຍບໍ່ເປັນພິດກະທັນຫັນ**

ຢາປາບສັດຕູພືດອັນຕະລາຍບໍ່ເປັນພິດກະທັນຫັນ ແມ່ນຢາປາບສັດຕູພືດທີ່ມີຄຸນລັກສະນະເປັນພິດຕໍ່ສຸຂະພາບ ແລະ ຊີວິດຂອງຄົນ ແຕ່ບໍ່ອອກລິດທັນທີ ຈາກຜົນໄດ້ຮັບທີ່ເຮັດໃຫ້ຈຳນວນສັດທົດລອງຕາຍ ຫ້າສິບສ່ວນຮ້ອຍ ເມື່ອໄດ້ຮັບທາດພິດຂອງຢາປາບສັດຕູພືດເຂົ້າທາງປາກ ຫຼື ຜິວໜັງ ໃນປະລິມານ ຫ້າພັນມິນລີກຣາມ ຫຼື ຫຼາຍກວ່າ ຕໍ່ນ້ຳໜັກຂອງສັດ ໜຶ່ງກິໂລກຣາມ.

ຢາປາບສັດຕູພືດອັນຕະລາຍບໍ່ເປັນພິດກະທັນຫັນ ສາມາດຜະລິດ, ນຳເຂົ້າ, ຈຳໜ່າຍ, ສົ່ງຜ່ານ, ສົ່ງອອກ, ນຳໃຊ້ ແລະ ຄອບຄອງ ໂດຍຂຶ້ນທະບຽນ ແລະ ຂໍອະນຸຍາດ ນຳຂະແໜງການກະສິກຳ ແລະ ປ່າໄມ້ ຍົກເວັ້ນຢາປາບສັດຕູພືດຊີວະພາບ ທີ່ມີຄວາມປອດໄພຕໍ່ສຸຂະພາບ ຂອງຄົນ, ສັດ ແລະ ສິ່ງແວດລ້ອມ ຊຶ່ງບໍ່ໄດ້ບັນຈຸໃສ່ພາຊະນະເພື່ອຈຳໜ່າຍ.

**ມາດຕາ 14 ບັນຊີຢາປາບສັດຕູພືດ**

ບັນຊີຢາປາບສັດຕູພືດ ແມ່ນລາຍການຢາປາບສັດຕູພືດ ທີ່ອະນຸຍາດໃຫ້ນຳໃຊ້ ແລະ ຫ້າມນຳໃຊ້ໃນ ສປປ ລາວ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ ແລະ ທົບທວນບັນຊີຢາປາບສັດຕູພືດ ທີ່ອະນຸຍາດໃຫ້ນຳໃຊ້ ບົນພື້ນຖານການຂຶ້ນທະບຽນວິຊາການຢາປາບສັດຕູພືດ ແລະ ບັນຊີຫ້າມນຳໃຊ້ໃນແຕ່ລະປີ ແລ້ວແຈ້ງບັນຊີ ຫຼື ການປ່ຽນແປງບັນຊີດັ່ງກ່າວ ໃຫ້ຂະແໜງການ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ລວມທັງປະເທດຄູ່ຄ້າຕາມການຮ້ອງຂໍ.

ບັນຊີຢາປາບສັດຕູພືດທີ່ອະນຸຍາດໃຫ້ນຳໃຊ້ ໃນ ສປປ ລາວ ຕ້ອງມີຂໍ້ມູນ ກ່ຽວກັບຊື່ການຄ້າ, ຊື່ສາມັນ ຫຼື ຊື່ສານເຄມີ, ທາດພິດ ແລະ ອັດຕາການນຳໃຊ້, ປະເພດຢາປາບສັດຕູພືດ, ສັດຕູພືດ ແລະ ພືດເປົ້າໝາຍ, ໄລຍະເວລາໃຫ້ຢຸດນຳໃຊ້ກ່ອນເກັບກ່ຽວພືດ ແລະ ລະດັບການຕົກຄ້າງຂອງຢາປາບສັດຕູພືດ.

## ໝວດທີ 3
## ການຂຶ້ນທະບຽນວິຊາການຢາປາບສັດຕູພືດ

**ມາດຕາ 15 ການຂຶ້ນທະບຽນວິຊາການຢາປາບສັດຕູພືດ**

ຜູ້ທີ່ມີຈຸດປະສົງ ຜະລິດ ຫຼື ນຳເຂົ້າ ເພື່ອຈຳໜ່າຍ ແລະ ນຳໃຊ້ຢາປາບສັດຕູພືດຢູ່ ສປປ ລາວ ຕ້ອງຍື່ນຄຳຮ້ອງພ້ອມດ້ວຍເອກະສານປະກອບ ຕໍ່ກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດ.

ໃນການຄົ້ນຄວ້າ ແລະ ພິຈາລະນາ ການຂຶ້ນທະບຽນວິຊາການຢາປາບສັດຕູພືດ ແມ່ນມີຄະນະກຳມະການພິຈາລະນາການຂຶ້ນທະບຽນ ທີ່ຖືກແຕ່ງຕັ້ງໂດຍລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້. ສຳລັບໂຄງປະກອບ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 ຢາປາບສັດຕູພືດ ທີ່ຍົກເວັ້ນການຂຶ້ນທະບຽນວິຊາການ**

ຢາປາບສັດຕູພືດ ທີ່ຍົກເວັ້ນການຂຶ້ນທະບຽນວິຊາການ ມີດັ່ງນີ້:

1. ຢາປາບສັດຕູພືດ ທີ່ນຳເຂົ້າຊົ່ວຄາວ ແລະ ສົ່ງອອກຕໍ່ ຫຼື ນຳເຂົ້າເພື່ອຜະລິດແລ້ວສົ່ງອອກ ຕາມສັນຍາລົງທຶນ ລະຫວ່າງຜູ້ລົງທຶນພາຍໃນ ກັບຕ່າງປະເທດ;

2. ຢາປາບສັດຕູພືດຊີວະພາບ ທີ່ມີຄວາມປອດໄພຕໍ່ສຸຂະພາບ ຂອງຄົນ, ສັດ ແລະ ສິ່ງແວດລ້ອມ ຊຶ່ງບໍ່ມີຈຸດປະສົງເພື່ອຈຳໜ່າຍ.

**ມາດຕາ 17 ເງື່ອນໄຂການຂຶ້ນທະບຽນວິຊາການຢາປາບສັດຕູພືດ**

ຜູ້ທີ່ມີຈຸດປະສົງຂຶ້ນທະບຽນວິຊາການຢາປາບສັດຕູພືດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ໄດ້ຮັບອະນຸຍາດດຳເນີນທຸລະກິດ ກ່ຽວກັບການຜະລິດ ຫຼື ການນຳເຂົ້າ ຢາປາບສັດຕູພືດໃນ ສປປ ລາວ;

2. ເປັນຢາປາບສັດຕູພືດ ທີ່ຂຶ້ນທະບຽນຈາກປະເທດສົ່ງອອກ;

3. ໄດ້ຮັບການມອບສິດຈາກຜູ້ຜະລິດຢາປາບສັດຕູພືດ ຂອງປະເທດສົ່ງອອກ;

4. ມີບົດປະເມີນ ກ່ຽວກັບປະສິດທິພາບ, ຄຸນລັກສະນະ ແລະ ຄວາມປອດໄພຂອງຢາປາບສັດຕູພືດ;

5. ມີແຜນການທົດສອບ ກ່ຽວກັບຄຸນນະພາບ ແລະ ປະສິດທິພາບຢາປາບສັດຕູພືດຢູ່ຫ້ອງວິໄຈ ແລະ ພາກສະໜາມ ໃນພື້ນທີ່ເປົ້າໝາຍ;

6. ມາດຕະຖານຕົວຢ່າງຢາປາບສັດຕູພືດ ແລະ ຕົວຢ່າງຜະລິດຕະພັນ.

ສໍາລັບເງື່ອນໄຂການຂຶ້ນທະບຽນວິຊາການຢາປາບສັດຕູພືດ ຕາມທີ່ກໍານົດໄວ້ໃນມາດຕາ 10 ຂອງດໍາລັດສະບັບນີ້ ແມ່ນກໍານົດໄວ້ໃນລະບຽບການສະເພາະ ຂອງກະຊວງກະສິກໍາ ແລະ ປ່າໄມ້.

**ມາດຕາ 18 ການປະກອບເອກະສານ**

ການປະກອບເອກະສານ ຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດ ມີ ດັ່ງນີ້:

1. ຄໍາຮ້ອງ;
2. ໃບທະບຽນວິສາຫະກິດ, ໃບອະນຸຍາດດໍາເນີນທຸລະກິດຢາປາບສັດຕູພືດ;
3. ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດ ຈາກປະເທດຕົ້ນກໍາເນີດ;
4. ໃບຢັ້ງຢືນຜົນການວິໄຈສ່ວນປະກອບຂອງຢາປາບສັດຕູພືດ ຈາກປະເທດຕົ້ນກໍາເນີດ;
5. ບົດປະເມີນ ກ່ຽວກັບປະສິດທິພາບ, ຄຸນລັກສະນະ ແລະ ຄວາມປອດໄພຂອງຢາປາບສັດຕູພືດ;
6. ແຜນການທົດສອບ ກ່ຽວກັບຄຸນນະພາບ ແລະ ປະສິດທິພາບຢາປາບສັດຕູພືດພາກສະໜາມ;
7. ໃບມອບສິດຈາກຜູ້ຜະລິດຢາປາບສັດຕູພືດ ຂອງປະເທດສົ່ງອອກ;
8. ໃບມອບສິດ ແລະ ບັດປະຈໍາຕົວ ຂອງຜູ້ຍື່ນເອກະສານ;
9. ເອກະສານອື່ນ ຕາມການກໍານົດຂອງກະຊວງກະສິກໍາ ແລະ ປ່າໄມ້.

**ມາດຕາ 19 ການຄົ້ນຄວ້າ ແລະ ພິຈາລະນາ ຂຶ້ນທະບຽນວິຊາການຢາປາບສັດຕູພືດ**

ພາຍຫຼັງໄດ້ຮັບຄໍາຮ້ອງ ແລະ ເອກະສານປະກອບ ຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດ ກົມປູກຝັງຕ້ອງຄົ້ນຄວ້າ ອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ພາຍໃນສິບຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານຖືກຕ້ອງ ໃນກໍລະນີຢາປາບສັດຕູພືດທີ່ຜະລິດຂຶ້ນ ຫຼື ນໍາເຂົ້າເປັນຄັ້ງທໍາອິດ ຫຼື ກໍາລັງຢູ່ໃນຂັ້ນຕອນທົດສອບປະສິດທິພາບ ໃນກໍລະນີປະຕິເສດການອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍ ເປັນລາຍລັກອັກສອນ.

ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ມີອາຍຸໜຶ່ງປີ ແລະ ສາມາດຂໍຕໍ່ໄດ້.

**ມາດຕາ 20 ການທົດສອບຢາປາບສັດຕູພືດ**

ການທົດສອບຢາປາບສັດຕູພືດ ແມ່ນການທົດລອງການນໍາໃຊ້ໃນພາກສະໜາມ ແລະ ວິໄຈໃນຫ້ອງທົດລອງ ທີ່ດໍາເນີນໂດຍສູນ, ສະຖານີ ຫຼື ທຸລະກິດວິໄຈ ແລະ ທົດສອບຢາປາບສັດຕູພືດ ທີ່ໄດ້ຮັບອະນຸຍາດຈາກກະຊວງກະສິກໍາ ແລະ ປ່າໄມ້.

ສູນ, ສະຖານີ ຫຼື ທຸລະກິດວິໄຈ ແລະ ທົດສອບຢາປາບສັດຕູພືດ ທີ່ດໍາເນີນການທົດສອບ ຕ້ອງອອກໃບຢັ້ງຢືນຜົນການທົດສອບຢາປາບສັດຕູພືດ, ໃບຢັ້ງຢືນດັ່ງກ່າວມີອາຍຸນໍາໃຊ້ ສາມປີ.

ຄ່າໃຊ້ຈ່າຍໃນການທົດສອບຢາປາບສັດຕູພືດ ໃຫ້ເປັນຄວາມຮັບຜິດຊອບ ຂອງຜູ້ສະເໜີຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດ.

**ມາດຕາ 21 ການອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ**

ເມື່ອສຳເລັດການທົດສອບຢາປາບສັດຕູພືດ ແລະ ໄດ້ປະຕິບັດຕາມເງື່ອນໄຂສະເພາະແລ້ວ ໃຫ້ຜູ້ໄດ້ຮັບໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຊົ່ວຄາວ ຍື່ນຄຳຮ້ອງຕໍ່ກົມປູກຝັງ ເພື່ອພິຈາລະນາອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ.

ພາຍຫຼັງໄດ້ຮັບຄຳຮ້ອງ ກົມປູກຝັງຕ້ອງຄົ້ນຄວ້າ ແລະ ສະເໜີຄະນະກຳມະການພິຈາລະນາການຂຶ້ນທະບຽນວິຊາການຢາປາບສັດຕູພືດ ພິຈາລະນາຮັບຮອງ ພາຍໃນສາມສິບວັນລັດຖະການ ເພື່ອອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ. ໃນກໍລະນີປະຕິເສດ ການອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍ ເປັນລາຍລັກອັກສອນ.

ໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຖາວອນ ມີອາຍຸສາມປີ ແລະ ສາມາດຂໍຕໍ່ໄດ້ສາມປີ.

**ມາດຕາ 22 ການອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຊ້ຳກັນ**

ການອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຊ້ຳກັນ ແມ່ນການອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດ ໃຫ້ແກ່ຜູ້ຜະລິດ, ນຳເຂົ້າຢາປາບສັດຕູພືດ ທີ່ສະເໜີຂຶ້ນທະບຽນວິຊາການຢາປາບສັດຕູພືດ ຊຶ່ງຢາປາບສັດຕູພືດດັ່ງກ່າວ ໄດ້ຂຶ້ນທະບຽນມາກ່ອນແລ້ວ.

ຜູ້ທີ່ມີຈຸດປະສົງ ຂໍຂຶ້ນທະບຽນວິຊາການຢາປາບສັດຕູພືດຊ້ຳກັນ ຕ້ອງໄດ້ຮັບການເຫັນດີເປັນລາຍລັກອັກສອນ ຈາກຜູ້ຂຶ້ນທະບຽນກ່ອນ.

**ມາດຕາ 23 ການອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຄືນໃໝ່**

ການອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຄືນໃໝ່ ແມ່ນການອອກໃບທະບຽນໃຫ້ໃນກໍລະນີ ດັ່ງນີ້:

1. ໃບທະບຽນ ເສຍຫາຍ, ຖືກທຳລາຍ ຫຼື ຂໍ້ມູນບໍ່ຖືກຕ້ອງ;
2. ຊື່ການຄ້າຂອງຢາປາບສັດຕູພືດ, ຂໍ້ມູນ ກ່ຽວກັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີການປ່ຽນແປງ ຕາມການສະເໜີຈາກເຈົ້າຂອງໃບຂຶ້ນທະບຽນວິຊາການຢາປາບສັດຕູພືດ.

ຜູ້ທີ່ມີຈຸດປະສົງຂໍໃບທະບຽນຢາປາບສັດຕູພືດຄືນໃໝ່ ໃຫ້ຍື່ນຄຳຮ້ອງພ້ອມດ້ວຍຂໍ້ມູນທີ່ກ່ຽວຂ້ອງ ຕໍ່ກົມປູກຝັງ.

ກົມປູກຝັງ ຕ້ອງພິຈາລະນາອອກໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຄືນໃໝ່ ພາຍໃນສິບວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ຂໍ້ມູນທີ່ກ່ຽວຂ້ອງເປັນຕົ້ນໄປ. ໃນກໍລະນີປະຕິເສດການຂໍໃບຂຶ້ນທະບຽນວິຊາການຢາປາບສັດຕູພືດຄືນໃໝ່ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍ ເປັນລາຍລັກອັກສອນ.

## ໝວດທີ 4
## ຄວາມປອດໄພກ່ຽວກັບຢາປາບສັດຕູພືດ

**ມາດຕາ 24 ຄວາມປອດໄພກ່ຽວກັບຢາປາບສັດຕູພືດ**

ຄວາມປອດໄພກ່ຽວກັບຢາປາບສັດຕູພືດ ແມ່ນມາດຕະການທີ່ນຳໃຊ້ ເພື່ອຄຸ້ມຄອງວຽກງານຢາປາບສັດຕູພືດໃຫ້ມີຄວາມປອດໄພ ຊຶ່ງລວມມີ ພາຊະນະບັນຈຸ ແລະ ການຫຸ້ມຫໍ່, ສະຫຼາກ ແລະ ການຕິດສະຫຼາກ, ການໂຄສະນາ, ການຜະລິດ, ການນຳເຂົ້າ, ການສົ່ງອອກ, ການສົ່ງຜ່ານ, ການຂົນສົ່ງ, ການເກັບຮັກສາ ແລະ ມີໄວ້ໃນຄອບຄອງ, ການນຳໃຊ້, ການຕິດຕາມ ແລະ ລາຍງານ, ການບຳບັດ ແລະ ກຳຈັດຢາປາບສັດຕູພືດ ແລະ ການພັດທະນາວຽກງານຢາປາບສັດຕູພືດ.

**ມາດຕາ 25 ພາຊະນະບັນຈຸ ແລະ ການຫຸ້ມຫໍ່**

ພາຊະນະບັນຈຸ ແລະ ການຫຸ້ມຫໍ່ຢາປາບສັດຕູພືດ ຕ້ອງຮັບປະກັນ ດັ່ງນີ້:

1. ມີຄວາມແຂງແກ່ນ, ທົນທານ ແລະ ຮັບປະກັນບໍ່ໃຫ້ຮົ່ວຊຶມ;
2. ບໍ່ເປື່ອຍ ແລະ ບໍ່ສົ່ງຜົນກະທົບຕໍ່ຄຸນນະພາບ ຂອງຢາປາບສັດຕູພືດ ພາຍໃຕ້ສະພາບປົກກະຕິຂອງການເກັບຮັກສາ ແລະ ນຳໃຊ້ ໃນໄລຍະເວລາທີ່ໄດ້ກຳນົດ;
3. ບໍ່ຄ້າຍຄືກັບພາຊະນະບັນຈຸ ແລະ ການຫຸ້ມຫໍ່ອາຫານ ແລະ ເຄື່ອງດື່ມ;
4. ມີຝາປິດແໜ້ນ ເພື່ອບໍ່ໃຫ້ເດັກນ້ອຍເປີດໄດ້;
5. ມີຄວາມເໝາະສົມກັບແຕ່ລະຊະນິດຢາປາບສັດຕູພືດ;
6. ມີຄວາມປອດໄພ ໃນເວລາເກັບຮັກສາ ແລະ ນຳໃຊ້.

**ມາດຕາ 26 ສະຫຼາກ ແລະ ການຕິດສະຫຼາກ**

ຢາປາບສັດຕູພືດທຸກຊະນິດ ທີ່ຜະລິດ, ນຳເຂົ້າ ແລະ ຈຳໜ່າຍໃນ ສປປ ລາວ ຕ້ອງມີ ສະຫຼາກເປັນຮູບພາບ, ຂໍ້ຄວາມ ຫຼື ເປັນຕົວອັກສອນ ພາສາລາວ ແລະ ພາສາຕ່າງປະເທດ ເພື່ອສະແດງ, ຊີ້ບອກຄວາມເປັນອັນຕະລາຍ, ຄຳແນະນຳໃນການນຳໃຊ້ ແລະ ການປ້ອງກັນຄວາມປອດໄພ ຂອງຢາປາບສັດຕູພືດ. ສຳລັບຮູບພາບ ແລະ ເນື້ອໃນຂອງສະຫຼາກ ແມ່ນກະຊວງກະສິກຳ ແລະ ປ່າໄມ້ເປັນຜູ້ກຳນົດ.

ການຕິດສະຫຼາກ ຕ້ອງຕິດແນບ ຫຼື ພິມໃສ່ກັບພາຊະນະບັນຈຸຢາປາບສັດຕູພືດໂດຍກົງ ແລະ ຕ້ອງຕິດໃຫ້ມີຄວາມແໜ້ນໜາ, ທົນທານ ແລະ ໝັ້ນໜຽວ.

**ມາດຕາ 27 ການໂຄສະນາ**

ການໂຄສະນາຢາປາບສັດຕູພືດ ຕ້ອງໃຫ້ຖືກຕ້ອງກັບ ເນື້ອໃນ, ຮູບການ ແລະ ສະຖານທີ່ ທີ່ໄດ້ຮັບອະນຸຍາດ. ສຳລັບເນື້ອໃນການໂຄສະນາ ຕ້ອງຊັດເຈນ, ຖືກຕ້ອງຕາມຄວາມເປັນຈິງຂອງປະເພດ, ຊະນິດ, ຄຸນລັກສະນະ, ຄຸນນະພາບຂອງຢາປາບສັດຕູພືດ, ເຄື່ອງໝາຍການຄ້າ, ລະດັບຄວາມເປັນອັນຕະລາຍ ແລະ ມາດຕະການປ້ອງກັນຄວາມປອດໄພ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງໂຄສະນາກ່ຽວກັບຢາປາບສັດຕູພືດ ຕ້ອງຂໍອະນຸຍາດຈາກຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 28 ການຜະລິດ**

ການຜະລິດຢາປາບສັດຕູພືດ ໃຫ້ປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານດ້ານເຕັກນິກ ດັ່ງນີ້:

1. ສະຖານທີ່ຜະລິດຢາປາບສັດຕູພືດ ທີ່ເປັນອັນຕະລາຍຮ້າຍແຮງ ແລະ ອັນຕະລາຍປານກາງ ຕ້ອງຢູ່ຫ່າງໄກຈາກຊຸມຊົນ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ແຫຼ່ງນໍ້າ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກ;

2. ມີລະບົບຮັກສາຄວາມປອດໄພ;

3. ມີເຄື່ອງຈັກ, ອຸປະກອນ, ຂະບວນການເຕັກນິກຜະລິດທີ່ເໝາະສົມ ກັບແຕ່ລະປະເພດຢາປາບສັດຕູພືດ;

4. ມີການຂົນສົ່ງ, ມີການເກັບຮັກສາ ແລະ ມີໄວ້ໃນຄອບຄອງ ຖືກຕ້ອງຕາມເຕັກນິກ ຕາມທີ່ກຳນົດໄວ້ໃນມາດຕາ 32 ແລະ 33 ຂອງດຳລັດສະບັບນີ້.

5. ມີລະບົບບຳບັດນໍ້າເສຍ ແລະ ສິ່ງເສດເຫຼືອຈາກໂຮງງານ ທີ່ໄດ້ຕາມມາດຕະຖານ ແລະ ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ;

6. ມີຫ້ອງປະຖົມພະຍາບານຂັ້ນຕົ້ນ ກໍລະນີເກີດອຸປະຕິເຫດຈາກຢາປາບສັດຕູພືດ.

**ມາດຕາ 29 ການນຳເຂົ້າ**

ການນຳເຂົ້າຢາປາບສັດຕູພືດ ຕ້ອງປະຕິບັດ ດັ່ງນີ້:

1. ຮັບປະກັນ ການຫຸ້ມຫໍ່, ຕິດສະຫຼາກ ແລະ ຂົນສົ່ງຢາປາບສັດຕູພືດມີຄວາມປອດໄພ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25, 26 ແລະ 32 ຂອງດຳລັດສະບັບນີ້;

2. ຮັບປະກັນຄຸນນະພາບ ຂອງຢາປາບສັດຕູພືດທີ່ນຳເຂົ້າ;

3. ນຳເຂົ້າຕາມດ່ານ ທີ່ກຳນົດໄວ້ໃນໃບອະນຸຍາດນຳເຂົ້າ ແລະ ໄດ້ຮັບການກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງຢາປາບສັດຕູພືດຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

4. ມີການເກັບຮັກສາ ແລະ ມີໄວ້ໃນຄອບຄອງ ຖືກຕ້ອງຕາມເຕັກນິກ ທີ່ກຳນົດໄວ້ໃນມາດຕາ 33 ຂອງດຳລັດສະບັບນີ້;

5. ປະຕິບັດຕາມຂັ້ນຕອນ, ເງື່ອນໄຂ ແລະ ມາດຕະຖານ ຂອງກະຊວງກະສິກຳ ແລະ ປ່າໄມ້ ກຳນົດໄວ້ແຕ່ລະໄລຍະ.

**ມາດຕາ 30 ການສົ່ງອອກ**

ຢາປາບສັດຕູພືດທີ່ຈະສົ່ງອອກ ຕ້ອງໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ແລະ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ, ລະບຽບການ ແລະ ເງື່ອນໄຂຂອງປະເທດນຳເຂົ້າ ແລະ ສົ່ງຜ່ານ.

**ມາດຕາ 31 ການສົ່ງຜ່ານ**

ການຂົນສົ່ງຢາປາບສັດຕູພືດ ຜ່ານ ສປປ ລາວ ຕ້ອງແຈ້ງໃຫ້ອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ຢ່າງໜ້ອຍສາມສິບວັນ ກ່ອນການສົ່ງຜ່ານ ແລະ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຮັບປະກັນຄວາມປອດໄພໃນການຂົນສົ່ງ, ບໍ່ໃຫ້ພາຊະນະບັນຈຸຮົ່ວຊຶມ ຫຼື ການແຜ່ກະຈາຍຂອງຢາປາບສັດຕູພືດ;

2. ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ, ສົນທິສັນຍາສອງຝ່າຍ ຫຼື ຫຼາຍຝ່າຍ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 32 ການຂົນສົ່ງ**

ການຂົນສົ່ງຢາປາບສັດຕູພືດ ແລະ ສິ່ງເສດເຫຼືອຢາປາບສັດຕູພືດ ທີ່ນຳໃຊ້ແບບຄົວເຮືອນ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຫຼີກເວັ້ນການນຳໃຊ້ພາຫະນະຂົນສົ່ງມວນຊົນ ແລະ ການຂົນສົ່ງທາງນ້ຳ ຕ້ອງຮັບປະກັນຄວາມປອດໄພ;

2. ມີການຈັດວາງ, ຫຸ້ມຫໍ່ພາຊະນະບັນຈຸ, ປິດແຈບ ແລະ ປອດໄພ ໂດຍແຍກອອກຈາກເຄື່ອງບໍລິໂພກ, ສິ່ງທີ່ມີຊີວິດ ແລະ ສິ່ງອື່ນ.

ສຳລັບການຂົນສົ່ງຢາປາບສັດຕູພືດ ລວມທັງສິ່ງເສດເຫຼືອຢາປາບສັດຕູພືດ ທີ່ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ຜະລິດ, ຈຳໜ່າຍ ແລະ ນຳໃຊ້ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີຜູ້ຂັບຂີ່ທີ່ມີປະສົບການ ແລະ ຄວາມຮູ້ພື້ນຖານ ກ່ຽວກັບການປ້ອງກັນ ແລະ ຮັກສາຄວາມປອດໄພ ກ່ຽວກັບຢາປາບສັດຕູພືດ;

2. ມີລົດຂົນສົ່ງ ຢາປາບສັດຕູພືດ ແລະ ສິ່ງເສດເຫຼືອຢາປາບສັດຕູພືດສະເພາະ ຕາມມາດຕະຖານເຕັກນິກທີ່ກ່ຽວຂ້ອງ;

3. ມີຄູ່ມື ແລະ ອຸປະກອນປ້ອງກັນຄວາມປອດໄພ;

4. ຂົນສົ່ງຕາມເສັ້ນທາງ ທີ່ໄດ້ຮັບອະນຸຍາດ;

5. ສຳເນົາໃບອະນຸຍາດນຳເຂົ້າ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ຂອງຜູ້ດຳເນີນທຸລະກິດ ນຳເຂົ້າ ແລະ ຈຳໜ່າຍ ໄປພ້ອມກັບການຂົນສົ່ງຢາປາບສັດຕູພືດ;

6. ມີລົດຂົນສົ່ງຢາປາບສັດຕູພືດ ທີ່ປິດແຈບ ແລະ ມີປ້າຍເຕືອນອັນຕະລາຍ;

7. ສຳລັບຂະບວນລົດຂົນສົ່ງຢາປາບສັດຕູພືດ ຕ້ອງມີລົດນຳຂະບວນຖືກຕ້ອງ ຕາມລະບຽບການທີ່ກ່ຽວຂ້ອງ.

8. ປະຕິບັດຕາມເງື່ອນໄຂອື່ນ ຕາມກົດໝາຍ ແລະ ລະບຽບການ.

ໃນກໍລະນີ ເກີດອຸປະຕິເຫດ ຫຼື ການຮົ່ວໄຫຼ ໃນລະຫວ່າງການຂົນສົ່ງຢາປາບສັດຕູພືດ ຜູ້ບໍລິການຂົນສົ່ງ ແລະ ເຈົ້າຂອງຢາປາບສັດຕູພືດ ຕ້ອງແຈ້ງຕໍ່ອົງການຄຸ້ມຄອງວຽກງານຢາປາບສັດຕູພືດທີ່ຢູ່ໃກ້ສຸດ ໃນທັນໃດ ໂດຍປະສານກັບຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຫາມາດຕະການແກ້ໄຂອຸປະຕິເຫດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຄຸ້ມຄອງເຄມີ, ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍ ກ່ຽວກັບການບຳບັດ ແລະ ກຳຈັດ ສິ່ງເສດເຫຼືອຢາປາບສັດຕູພືດ ຕາມແຕ່ລະກໍລະນີ.

**ມາດຕາ 33 ການເກັບຮັກສາ ແລະ ມີໄວ້ໃນຄອບຄອງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເກັບຮັກສາ ແລະ ມີໄວ້ຄອບຄອງຢາປາບສັດຕູພືດ ໃຫ້ແຍກຈາກວັດຖຸອື່ນ ແລະ ໃຫ້ປະຕິບັດຕາມຄໍາແນະນໍາສໍາລັບການເກັບຮັກສາ ທີ່ຂຽນໄວ້ໃນສະຫຼາກຢາປາບສັດຕູພືດ.

ນອກຈາກນັ້ນ ສໍາລັບຜູ້ຜະລິດ, ຜູ້ນໍາເຂົ້າ ແລະ ຜູ້ຈໍາໜ່າຍ ຢາປາບສັດຕູພືດ ຕ້ອງມີ:

1. ສາງເກັບມ້ຽນສະເພາະ ທີ່ຫ່າງໄກຈາກເດັກນ້ອຍ, ຊຸມຊົນ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ແຫຼ່ງນໍ້າ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກ, ມີລະບົບການເກັບຮັກສາທີ່ປອດໄພ ລວມທັງມາດຕະການບົວລະບັດຮັກສາ, ມາດຕະການປ້ອງກັນ, ຟື້ນຟູ, ກໍາຈັດຄວາມເປັນພິດ ແລະ ອັກຄີໄພ;

2. ການຝຶກອົບຮົມ ໃຫ້ແກ່ແຮງງານເຮັດວຽກໃນສາງເກັບມ້ຽນ ກ່ຽວກັບການປ້ອງກັນ ແລະ ຮັກສາຄວາມປອດໄພ ແລະ ມີປ້າຍເຕືອນອັນຕະລາຍ ຕິດໄວ້ໃນສາງເກັບມ້ຽນ;

3. ບັນທຶກຂໍ້ມູນການເກັບຮັກສາຢາປາບສັດຕູພືດ ແລະ ລາຍງານເປັນປົກກະຕິ ໃຫ້ອົງການຄຸ້ມຄອງວຽກງານຢາປາບສັດຕູພືດຊາບ;

4. ປະຕິບັດຕາມເງື່ອນໄຂອື່ນ ທີ່ກະຊວງກະສິກໍາ ແລະ ປ່າໄມ້ກໍານົດໄວ້.

ໃນກໍລະນີເກີດອຸປະຕິເຫດ ຫຼື ການຮົ່ວໄຫຼ ໃນໄລຍະການເກັບຮັກສາ ຫຼື ຄອບຄອງຢາປາບສັດຕູພືດ ຜູ້ເກັບຮັກສາ ຫຼື ເຈົ້າຂອງຢາປາບສັດຕູພືດ ຕ້ອງແຈ້ງຕໍ່ອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ທີ່ຢູ່ໃກ້ສຸດໃນທັນໃດ ໂດຍປະສານກັບຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຫາມາດຕະການແກ້ໄຂອຸປະຕິເຫດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການຄຸ້ມຄອງເຄມີ, ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍ ກ່ຽວກັບການບໍາບັດ ແລະ ກໍາຈັດສິ່ງເສດເຫຼືອຢາປາບສັດຕູພືດ ຕາມແຕ່ລະກໍລະນີ.

**ມາດຕາ 34 ການນໍາໃຊ້**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນໍາໃຊ້ຢາປາບສັດຕູພືດ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ເປັນຢາປາບສັດຕູພືດທີ່ໄດ້ຂຶ້ນທະບຽນອະນຸຍາດ ນໍາກະຊວງກະສິກໍາ ແລະ ປ່າໄມ້;

2. ນໍາໃຊ້ເທົ່າທີ່ຈໍາເປັນ ເພື່ອຫຼຸດຜ່ອນຄວາມສ່ຽງຈາກຢາປາບສັດຕູພືດ ພາຍຫຼັງປະຕິບັດຕາມຫຼັກການປ້ອງກັນພືດແບບປະສົມປະສານ;

3. ຄັດເລືອກຢາປາບສັດຕູພືດທີ່ເໝາະສົມ ເພື່ອນໍາໃຊ້ເຂົ້າໃນການກໍາຈັດສັດຕູພືດ ແລະ ພືດເປົ້າໝາຍ ຕາມທີ່ກໍານົດໄວ້ໃນສະຫຼາກ;

4. ປະຕິບັດຕາມຄໍາແນະນໍາການນໍາໃຊ້ ແລະ ໄລຍະເວລາຢຸດໃຊ້ກ່ອນເກັບກ່ຽວພືດ ທີ່ກໍານົດໄວ້ໃນສະຫຼາກ;

5. ປະຕິບັດຕາມເຕັກນິກວິຊາການ ໃນການນໍາໃຊ້ຢາປາບສັດຕູພືດ ໃຫ້ຖືກຕ້ອງ ແລະ ເໝາະສົມເພື່ອຮັບປະກັນປະສິດທິພາບ ແລະ ຄວາມປອດໄພຕໍ່ສຸຂະພາບ ຂອງຄົນ, ສັດ ແລະ ສິ່ງແວດລ້ອມ;

6. ມີອຸປະກອນ ແລະ ເຄື່ອງນຸ່ງປ້ອງກັນຄວາມປອດໄພ ພ້ອມທັງຮັບປະກັນຄວາມປອດໄພ ຕໍ່ ຄົນ, ສັດ ແລະ ສິ່ງແວດລ້ອມບໍລິເວນໃກ້ຄຽງ ຕາມເຕັກນິກໃນລະຫວ່າງການນໍາໃຊ້ຢາປາບສັດຕູພືດ ແລະ ຕິດປ້າຍເຕືອນອັນຕະລາຍ ກ່ອນ ແລະ ພາຍຫຼັງການນໍາໃຊ້;

7. ເກັບຮັກສາຢາປາບສັດຕູພືດໃຫ້ມີຄວາມປອດໄພ ແລະ ກໍາຈັດທໍາລາຍສິ່ງເສດເຫຼືອຢາປາບສັດຕູພືດທັນທີໃຫ້ຖືກຕ້ອງ ຕາມຂໍ້ແນະນໍາທີ່ກໍານົດໄວ້ໃນສະຫຼາກຢາປາບສັດຕູພືດ ພາຍຫຼັງການນໍາໃຊ້;

8. ມີການກວດກາສຸຂະພາບປະຈໍາປີ ສໍາລັບຜູ້ນໍາໃຊ້ຢາປາບສັດຕູພືດ.

ໃນກໍລະນີເກີດອຸປະຕິເຫດ ຫຼື ການເບື່ອ ໃນລະຫວ່າງການນໍາໃຊ້ຢາປາບສັດຕູພືດ ຜູ້ນໍາໃຊ້ຢາປາບສັດຕູພືດ ຕ້ອງປະຕິບັດຕາມຄໍາແນະນໍາເບື້ອງຕົ້ນໃນສະຫຼາກ ແລະ ແຈ້ງຕໍ່ອົງການຄຸ້ມຄອງວຽກງານຢາປາບສັດຕູພືດທີ່ຢູ່ໃກ້ສຸດໃນທັນໃດ ໂດຍປະສານກັບຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຫາມາດຕະການແກ້ໄຂອຸປະຕິເຫດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການຄຸ້ມຄອງເຄມີ.

**ມາດຕາ 35 ການຕິດຕາມ ແລະ ລາຍງານ ກ່ຽວກັບຢາປາບສັດຕູພືດ**

ຂະແໜງການກະສິກໍາ ແລະ ປ່າໄມ້ ຕ້ອງປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງແຜນການສໍາຫຼວດຄວາມສ່ຽງຢາປາບສັດຕູພືດ ເພື່ອຕິດຕາມເກັບກໍາຂໍ້ມູນ ກ່ຽວກັບການຜະລິດ, ການນໍາເຂົ້າ, ການຈໍາໜ່າຍ, ການນໍາໃຊ້, ປະສິດທິພາບ, ຜົນກະທົບ ແລະ ສານຕົກຄ້າງຂອງຢາປາບສັດຕູພືດ ລວມທັງຢາປາບສັດຕູພືດທີ່ຫ້າມນໍາໃຊ້.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງເປັນເຈົ້າການລາຍງານ ຕໍ່ອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ທີ່ຢູ່ໃກ້ສຸດຊາບ ເມື່ອພົບເຫັນຢາປາບສັດຕູພືດທີ່ຫ້າມນໍາໃຊ້, ການເບື່ອ ຫຼື ປະກົດການຜົນກະທົບທີ່ເກີດຂຶ້ນຈາກຢາປາບສັດຕູພືດ, ການນໍາໃຊ້ ແລະ ການເຄື່ອນໄຫວກິດຈະການຢາປາບສັດຕູພືດ ທີ່ບໍ່ຖືກຕ້ອງຕາມລະບຽບການ.

**ມາດຕາ 36 ການບໍາບັດ ແລະ ກໍາຈັດຢາປາບສັດຕູພືດ**

ຢາປາບສັດຕູພືດປອມ, ເສຍຄຸນລັກສະນະ, ບໍ່ໄດ້ມາດຕະຖານ ແລະ ສິ່ງເສດເຫຼືອຢາປາບສັດຕູພືດ ຕ້ອງບໍາບັດ ຫຼື ກໍາຈັດ ຕາມວິທີການທີ່ກໍານົດໄວ້, ໃນກໍລະນີບໍ່ສາມາດບໍາບັດ ຫຼື ກໍາຈັດໄດ້ ຕ້ອງເກັບຮັກສາໄວ້ໃນບ່ອນທີ່ປອດໄພ ແລະ ແຈ້ງຕໍ່ອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງເພື່ອກໍານົດມາດຕະການແກ້ໄຂທີ່ເໝາະສົມ.

ການບໍາບັດ ແລະ ການກໍາຈັດຢາປາບສັດຕູພືດ ຕ້ອງປະຕິບັດຕາມຄູ່ມືແນະນໍາ ແລະ ນໍາໃຊ້ເຕັກໂນໂລຊີ ທີ່ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມກໍານົດ. ຄ່າໃຊ້ຈ່າຍໃນການບໍາບັດ ຫຼື ກໍາຈັດຢາປາບສັດຕູພືດ ໃຫ້ເປັນຄວາມຮັບຜິດຊອບຂອງເຈົ້າຂອງຢາປາບສັດຕູພືດ.

**ມາດຕາ 37 ການພັດທະນາວຽກງານຢາປາບສັດຕູພືດ**

ກະຊວງກະສິກໍາ ແລະ ປ່າໄມ້ ປະສານສົມທົບກັບ ກະຊວງສຶກສາທິການ ແລະ ກິລາ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຄົ້ນຄວ້າຫຼັກສູດກ່ຽວກັບຄວາມສ່ຽງຢາປາບສັດຕູພືດ, ພັດທະນາ ຢາປາບສັດຕູພືດທີ່ເປັນອັນຕະລາຍໜ້ອຍ, ຢາປາບສັດຕູພືດຊີວະພາບ ແລະ ເຕັກນິກການນໍາໃຊ້ໃຫ້ເໝາະສົມ ເພື່ອປ່ຽນແທນຢາປາບສັດຕູພືດທີ່ເປັນເຄມີ ເທື່ອລະກ້າວ.

# ໝວດທີ 5
# ທຸລະກິດຢາປາບສັດຕູພືດ

**ມາດຕາ 38 ການດຳເນີນທຸລະກິດຢາປາບສັດຕູພືດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບຢາປາບສັດຕູພືດ ຕ້ອງໄດ້ຂຶ້ນທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມກົດໝາຍວ່າດ້ວຍວິສາຫະກິດ, ພາຍຫຼັງໄດ້ທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດເຄື່ອນໄຫວກິດຈະການ ກ່ຽວກັບຢາປາບສັດຕູພືດ ນຳຂະແໜງການກະສິກຳ ແລະ ປ່າໄມ້ .

**ມາດຕາ 39 ປະເພດທຸລະກິດຢາປາບສັດຕູພືດ**

ປະເພດທຸລະກິດຢາປາບສັດຕູພືດ ມີ ດັ່ງນີ້:

1. ທີ່ປຶກສາດ້ານຢາປາບສັດຕູພືດ;
2. ການຜະລິດຢາປາບສັດຕູພືດ;
3. ການນຳເຂົ້າ ແລະ ຈຳໜ່າຍຢາປາບສັດຕູພືດ;
4. ການບໍລິການດ້ານຢາປາບສັດຕູພືດ;
5. ການບຳບັດ ແລະ ກຳຈັດຢາປາບສັດຕູພືດ;
6. ການວິໄຈ ແລະ ທົດສອບຢາປາບສັດຕູພືດ;
7. ທຸລະກິດອື່ນ ທີ່ກ່ຽວຂ້ອງກັບຢາປາບສັດຕູພືດ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

**ມາດຕາ 40 ທຸລະກິດທີ່ປຶກສາດ້ານຢາປາບສັດຕູພືດ**

ທຸລະກິດທີ່ປຶກສາດ້ານຢາປາບສັດຕູພືດ ແມ່ນການບໍລິການໃຫ້ຄຳແນະນຳ ກ່ຽວກັບການຜະລິດ, ການຈຳໜ່າຍ, ການນຳໃຊ້, ການກຳຈັດ, ການບຳບັດ, ການວິໄຈ, ການທົດສອບ ແລະ ການເຄື່ອນໄຫວອື່ນ ກ່ຽວກັບຢາປາບສັດຕູພືດ.

ຜູ້ທີ່ຈະດຳເນີນທຸລະກິດ ທີ່ປຶກສາດ້ານຢາປາບສັດຕູພືດ ຕ້ອງຮຽນຈົບວິຊາສະເພາະດ້ານເຄມີ, ປູກຝັງ ຫຼື ປ້ອງກັນພືດ, ຜ່ານການຝຶກອົບຮົມ ແລະ ມີປະສົບການເຮັດວຽກຕົວຈິງ ກ່ຽວກັບຢາປາບສັດຕູພືດຢ່າງໜ້ອຍຫ້າປີ.

**ມາດຕາ 41 ທຸລະກິດການຜະລິດຢາປາບສັດຕູພືດ**

ທຸລະກິດການຜະລິດຢາປາບສັດຕູພືດ ແມ່ນການປະສົມສ່ວນປະກອບຕ່າງໆ ຫຼື ວັດຖຸດິບໃຫ້ເປັນຜະລິດຕະພັນຢາປາບສັດຕູພືດໃດໜຶ່ງ ລວມທັງການປຸງແຕ່ງຢາປາບສັດຕູພືດ.

ຜູ້ທີ່ຈະດຳເນີນທຸລະກິດການຜະລິດຢາປາບສັດຕູພືດ ຕ້ອງມີ ສະຖານທີ່ຕັ້ງ, ຫ້ອງວິໄຈ, ບຸກຄະລາກອນວິຊາການ, ເຄື່ອງມືອຸປະກອນທີ່ເໝາະສົມ, ສາງເກັບມ້ຽນ, ພາຫະນະຂົນສົ່ງ, ລະບົບການຄຸ້ມຄອງຮັກສາຄຸນນະພາບ, ລະບົບຮັກສາຄວາມປອດໄພ, ລະບົບບຳບັດສິ່ງເສດເຫຼືອຢາປາບສັດຕູພືດ, ພື້ນທີ່ກວ້າງຂວາງຫ່າງໄກຈາກເຂດຊຸມຊົນ, ສັດລ້ຽງ ແລະ ແຫຼ່ງນ້ຳ ຕາມມາດຕະຖານເຕັກນິກ ທີ່ຂະແໜງການກ່ຽວຂ້ອງກຳນົດ ໂດຍສະເພາະຕ້ອງໄດ້ຜ່ານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

**ມາດຕາ 42 ທຸລະກິດການນຳເຂົ້າ ແລະ ຈຳໜ່າຍ ຢາປາບສັດຕູພືດ**

ຜູ້ທີ່ຈະດຳເນີນທຸລະກິດ ການນຳເຂົ້າ ແລະ ຈຳໜ່າຍຢາປາບສັດຕູພືດ ຕ້ອງມີວິຊາການທີ່ໄດ້ຮັບໃບປະກາດສະນີຍາບັດ ຫຼື ໃບຢັ້ງຢືນປະກອບວິຊາຊີບຈຳໜ່າຍຢາປາບສັດຕູພືດ ທີ່ຮັບຮອງຈາກກະຊວງກະສິກຳ ແລະ ປ່າໄມ້, ມີສາງເກັບມ້ຽນ, ສະຖານທີ່ຈຳໜ່າຍສະເພາະ, ພາຫະນະຂົນສົ່ງ, ຕູ້ເກັບມ້ຽນຢາປາບສັດຕູພືດສະເພາະ, ອຸປະກອນຮັບໃຊ້, ເຄື່ອງໃຊ້ຫ້ອງການ, ລະບົບຮັກສາຄວາມປອດໄພ ແລະ ປິ່ນປົວເບື້ອງຕົ້ນ ຕາມມາດຕະຖານເຕັກນິກ ທີ່ຂະແໜງການກ່ຽວຂ້ອງກຳນົດ.

**ມາດຕາ 43 ທຸລະກິດການບໍລິການດ້ານຢາປາບສັດຕູພືດ**

ທຸລະກິດການບໍລິການດ້ານຢາປາບສັດຕູພືດ ແມ່ນການດຳເນີນກິດຈະການ ກ່ຽວກັບການຮົມ, ສີດພົ່ນ ຫຼື ວິທີການອື່ນ ເພື່ອກຳຈັດສັດຕູພືດ ໃນພື້ນທີ່ການຜະລິດກະສິກຳ ແລະ ສະຖານທີ່ອື່ນ.

ຜູ້ທີ່ຈະດຳເນີນທຸລະກິດການບໍລິການດ້ານຢາປາບສັດຕູພືດ ຕ້ອງມີບຸກຄະລາກອນ ທີ່ຜ່ານການຝຶກອົບຮົມວິຊາຊີບທີ່ຮັບຮອງ ຈາກກະຊວງກະສິກຳ ແລະ ປ່າໄມ້ ແລະ ມີປະສົບການເຮັດວຽກຕົວຈິງຢ່າງໜ້ອຍສາມປີ, ມີເຄື່ອງມືອຸປະກອນທີ່ພຽງພໍ, ມີລະບົບການປ້ອງກັນ ແລະ ສະຫວັດດີການສຳລັບຜູ້ເຮັດວຽກກັບຢາປາບສັດຕູພືດ, ມີລະບົບການບັນທຶກຢາປາບສັດຕູພືດທີ່ຖືກນຳໃຊ້ ແລະ ປະຕິບັດຕາມລະບຽບການທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

**ມາດຕາ 44 ທຸລະກິດການບຳບັດ ແລະ ກຳຈັດຢາປາບສັດຕູພືດ**

ຜູ້ທີ່ຈະດຳເນີນທຸລະກິດການບຳບັດ ແລະ ກຳຈັດຢາປາບສັດຕູພືດ ຕ້ອງມີສະຖານທີ່ຕັ້ງສະເພາະ, ບຸກຄະລາກອນ, ເຄື່ອງມື, ອຸປະກອນ, ລະບົບຮັກສາຄວາມປອດໄພ ຕາມມາດຕະຖານເຕັກນິກທີ່ຂະແໜງການກ່ຽວຂ້ອງ ກຳນົດໂດຍສະເພາະຕ້ອງໄດ້ຜ່ານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

**ມາດຕາ 45 ທຸລະກິດການວິໄຈ ແລະ ທົດສອບຢາປາບສັດຕູພືດ**

ທຸລະກິດການວິໄຈຢາປາບສັດຕູພືດ ແມ່ນການວິເຄາະຄຸນນະພາບ ແລະ ສານພິດຕົກຄ້າງຂອງຢາປາບສັດຕູພືດໃນຫ້ອງວິໄຈ. ຜູ້ທີ່ຈະດຳເນີນທຸລະກິດການວິໄຈ ຕ້ອງມີນັກວິໄຈ, ສະຖານທີ່ຕັ້ງສະເພາະ, ຫ້ອງວິໄຈ, ເຄື່ອງມືວິໄຈ, ລະບົບຮັກສາຄວາມປອດໄພ, ການຄຸ້ມຄອງຄຸນນະພາບຂອງການວິໄຈ, ການບຳບັດ ແລະ ກຳຈັດສິ່ງເສດເຫຼືອ ຈາກການວິໄຈຢາປາບສັດຕູພືດ.

ການທົດສອບຢາປາບສັດຕູພືດ ແມ່ນການປະເມີນປະສິດທິພາບ ແລະ ຄວາມປອດໄພຂອງຢາປາບສັດຕູພືດ ໃນການນຳໃຊ້ພາກສະໜາມ. ຜູ້ທີ່ຈະດຳເນີນທຸລະກິດທົດສອບຢາປາບສັດຕູພືດ ຕ້ອງມີແຜນການທົດສອບ, ສະຖານທີ່ທົດສອບ, ເຄື່ອງມືອຸປະກອນ, ນັກວິຊາການ ແລະ ລະບົບຮັກສາຄວາມປອດໄພ.

**ມາດຕາ 46 ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດຢາປາບສັດຕູພືດ**

ຜູ້ດຳເນີນທຸລະກິດຢາປາບສັດຕູພືດ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຂອງຕົນ ໃຫ້ຖືກຕ້ອງຕາມການອະນຸຍາດ, ມາດຕະຖານເຕັກນິກ, ກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;

2. ການນຳເຂົ້າ, ການຈຳໜ່າຍ ແລະ ການບໍລິການ ດ້ານຢາປາບສັດຕູພືດ ຕ້ອງຕິດບັນຊີຢາປາບສັດຕູພືດຕ້ອງຫ້າມ ແລະ ມີໃບອະນຸຍາດດຳເນີນທຸລະກິດ ຢາປາບສັດຕູພືດ ຕາມທີ່ກຳນົດໄວ້ໃນມາດຕາ 14

ແລະ 38 ຂອງດຳລັດສະບັບນີ້ ໂດຍສະເພາະໃນຮ້ານຈຳໜ່າຍ, ສາງເກັບມ້ຽນ ແລະ ຈຸດບໍລິການຂອງຕົນ ໃນບ່ອນທີ່ຄົນເຫັນງ່າຍ;

3. ຮັບຂໍ້ມູນຂ່າວສານ ກ່ຽວກັບວຽກງານຢາປາບສັດຕູພືດ;

4. ເປັນເຈົ້າການໃນການຮັກສາຄວາມປອດໄພ, ນຳໃຊ້ທຸກວິທີການເພື່ອສະກັດກັ້ນ ແລະ ແກ້ໄຂການຮົ່ວຊຶມ, ການແຜ່ກະຈາຍ ຫຼື ຜົນກະທົບຂອງຢາປາບສັດຕູພືດ ຕໍ່ຄົນ, ສັດ ແລະ ສິ່ງແວດລ້ອມ ພ້ອມທັງຮັບຜິດຊອບຕໍ່ຄວາມເສຍຫາຍ ຈາກການດຳເນີນທຸລະກິດຂອງຕົນ;

5. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການຂອງພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ;

6. ປະກອບສ່ວນທາງດ້ານ ທຶນຮອນ ຫຼື ແຮງງານ ເຂົ້າໃນການພັດທະນາວຽກງານຢາປາບສັດຕູພືດ;

7. ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;

8. ໃຫ້ການຮ່ວມມື, ສະໜອງຂໍ້ມູນຂ່າວສານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ;

9. ແຈ້ງ ແລະ ລາຍງານ ສະພາບເຫດການ ໃນກໍລະນີພົບເຫັນຢາປາບສັດຕູພືດທີ່ຫ້າມນຳໃຊ້, ປະກົດການຜົນກະທົບທີ່ເກີດຂຶ້ນ ຈາກຢາປາບສັດຕູພືດ, ການນຳໃຊ້ ແລະ ການເຄື່ອນໄຫວກິດຈະການຢາປາບສັດຕູພືດ ທີ່ບໍ່ຖືກຕ້ອງຕາມລະບຽບການ.

**ມາດຕາ 47 ການໂຈະ ແລະ ການຖອນໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ**

ອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ສາມາດໂຈະການດຳເນີນທຸລະກິດຢາປາບສັດຕູພືດໃດໜຶ່ງ ຖ້າເຫັນວ່າຜູ້ດຳເນີນທຸລະກິດ ຫາກລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຢາປາບສັດຕູພືດ ຫຼື ມີພຶດຕິກຳອື່ນ ທີ່ສົ່ງຜົນກະທົບຕໍ່ ຄົນ, ສັດ ແລະ ສິ່ງແວດລ້ອມ.

ໃນກໍລະນີມີການລະເມີດທີ່ຮ້າຍແຮງ ຫຼື ບໍ່ປະຕິບັດຕາມການແນະນຳ ຂອງອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ສາມາດຖອນໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ ແລະ ສະເໜີຂະແໜງການທີ່ກ່ຽວ ຂ້ອງ ພິຈາລະນາຍົກເລີກ ການດຳເນີນທຸລະກິດນັ້ນ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 48 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ນຳເຂົ້າ, ຄອບຄອງ ຫຼື ນຳໃຊ້ຢາປາບສັດຕູພືດ ທີ່ບໍ່ໄດ້ຂຶ້ນທະບຽນວິຊາການ ຢູ່ ສປປ ລາວ;

2. ຖິ້ມ, ລ້າງ ຫຼື ຖອກ ສິ່ງເສດເຫຼືອຢາປາບສັດຕູພືດ ລົງແຫຼ່ງນ້ຳ ແລະ ເຂດຊຸມຊົນ;

3. ຈ້າງບຸກຄົນໃຫ້ບໍລິການ ກ່ຽວກັບຢາປາບສັດຕູພືດ ທີ່ບໍ່ໄດ້ຮັບອະນຸຍາດ;

4. ບຳບັດ, ກຳຈັດຢາປາບສັດຕູພືດ ແລະ ສິ່ງເສດເຫຼືອຢາປາບສັດຕູພືດ ບໍ່ຖືກຕ້ອງຕາມມາດຕາ 36 ຂອງດຳລັດສະບັບນີ້;

5. ນຳໃຊ້ພາຊະນະບັນຈຸ ຫຼື ສິ່ງຫຸ້ມຫໍ່ຢາປາບສັດຕູພືດ ເພື່ອບັນຈຸອາຫານ, ເຄື່ອງດື່ມ ຫຼື ຈຸດປະສົງອື່ນ;

6. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 49 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ນອກຈາກຂໍ້ຫ້າມທົ່ວໄປ ທີ່ໄດ້ກຳນົດໄວ້ໃນມາດຕາ 48 ຂອງດຳລັດສະບັບນີ້ ຫ້າມຜູ້ດຳເນີນທຸລະກິດຢາປາບສັດຕູພືດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດຢາປາບສັດຕູພືດ ໂດຍທີ່ບໍ່ໄດ້ຮັບອະນຸຍາດ;

2. ຜະລິດ, ນຳເຂົ້າ, ສົ່ງອອກ, ນຳໃຊ້ ຫຼື ຈຳໜ່າຍ ຢາປາບສັດຕູພືດ ທີ່ບໍ່ໄດ້ຂຶ້ນທະບຽນ, ຢາປາບສັດຕູພືດປອມ, ຢາປາບສັດຕູພືດເສຍຄຸນລັກສະນະ ແລະ ຢາປາບສັດຕູພືດບໍ່ໄດ້ມາດຕະຖານ ລວມທັງສິ່ງເສດເຫຼືອຢາປາບສັດຕູພືດ;

3. ຖ່ຽນຖ່າຍ ຫຼື ແບ່ງຢາປາບສັດຕູພືດ ຈາກພາຊະນະບັນຈຸເດີມ ເພື່ອຂາຍ ແລະ ນຳໃຊ້ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງວຽກງານຢາປາບສັດຕູພືດ;

4. ປ່ຽນແປງ ການຫຸ້ມຫໍ່, ເນື້ອໃນ ຫຼື ອົງປະກອບ ໃນສະຫຼາກຢາປາບສັດຕູພືດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງວຽກງານຢາປາບສັດຕູພືດ;

5. ໃຫ້ລາງວັນ ຫຼື ຂອງຂວັນ ເພື່ອຊຸກຍູ້ການຊື້ ຫຼື ນຳໃຊ້ຢາປາບສັດຕູພືດຂອງຕົນ ຍົກເວັ້ນເຄື່ອງປ້ອງກັນຕົວ ກ່ຽວກັບການນຳໃຊ້ຢາປາບສັດຕູພືດ;

6. ໂຄສະນາ ຫຼື ໃສ່ຮ້າຍປ້າຍສີ ຜູ້ດຳເນີນທຸລະກິດອື່ນ;

7. ຈຳໜ່າຍຢາປາບສັດຕູພືດ ໃຫ້ຜູ້ຂາຍຍ່ອຍ ຫຼື ຜູ້ຈຳໜ່າຍອື່ນ ທີ່ບໍ່ມີໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ;

8. ບຳບັດ ຫຼື ກຳຈັດສິ່ງເສດເຫຼືອຢາປາບສັດຕູພືດ ໂດຍບໍ່ໄດ້ຮັບອະນຸຍາດ;

9. ໃຫ້ສິນບົນແກ່ພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ, ປອມແປງເອກະສານກ່ຽວກັບວຽກງານຢາປາບສັດຕູພືດ;

10. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 50 ຂໍ້ຫ້າມສຳລັບຜູ້ນຳໃຊ້**

ນອກຈາກຂໍ້ຫ້າມທົ່ວໄປ ທີ່ໄດ້ກຳນົດໄວ້ໃນມາດຕາ 48 ຂອງດຳລັດສະບັບນີ້ ຫ້າມຜູ້ນຳໃຊ້ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ຢາປາບສັດຕູພືດທີ່ບໍ່ໄດ້ຂຶ້ນທະບຽນ;

2. ນຳໃຊ້ຢາປາບສັດຕູພືດໂດຍບໍ່ຖືກຕ້ອງຕາມຫຼັກວິຊາການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງດຳລັດສະບັບນີ້;

3. ນຳໃຊ້ຢາປາບສັດຕູພືດໃກ້ແຫຼ່ງນ້ຳທີ່ໃຊ້ບໍລິໂພກ;

4. ໃຫ້ເດັກອາຍຸຕ່ຳກວ່າ ສິບຫ້າປີ ແລະ ຜູ້ຍິງຖືພານຳໃຊ້ຢາປາບສັດຕູພືດ;

5. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 51 ຂໍ້ຫ້າມສໍາລັບພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ**

ນອກຈາກຂໍ້ຫ້າມທົ່ວໄປ ທີ່ໄດ້ກໍານົດໄວ້ໃນມາດຕາ 48 ຂອງດໍາລັດສະບັບນີ້ ຫ້າມພະນັກງານ ແລະ ເຈົ້າໜ້າກວດກາຢາປາບສັດຕູພືດ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ຕໍາແໜ່ງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດໃສ່ຕົນ ຫຼື ພັກພວກຕົນ;
2. ເປີດເຜີຍຄວາມລັບ ຂອງທາງລັດຖະການ ຫຼື ຂອງຜູ້ດໍາເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ຮັບສິນບົນ, ກົດໜ່ວງຖ່ວງດຶງເອກະສານ;
4. ປອມແປງເອກະສານ ຫຼື ອອກເອກະສານທີ່ບໍ່ຖືກຕ້ອງ;
5. ເພີ່ມ ຫຼື ຫຼຸດຄ່າທໍານຽມ, ຄ່າບໍລິການວິຊາການ ຫຼື ນໍາໃຊ້ລາຍຮັບຈາກວຽກງານຢາປາບສັດຕູພືດ ບໍ່ຖືກຕ້ອງຕາມລະບຽບການ;
6. ຂາດຄວາມຮັບຜິດຊອບ ຫຼື ປະຕິບັດໜ້າທີ່ດ້ວຍຄວາມປະໝາດ ຊຶ່ງພາໃຫ້ເກີດຄວາມເສຍຫາຍ;
7. ມີພຶດຕິກໍາອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຄຸ້ມຄອງວຽກງານຢາປາບສັດຕູພືດ

**ມາດຕາ 52 ອົງການຄຸ້ມຄອງວຽກງານຢາປາບສັດຕູພືດ**

ລັດຖະບານ ຄຸ້ມຄອງວຽກງານຢາປາບສັດຕູພືດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງກະສິກໍາ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ປະກອບດ້ວຍ:

1. ກະຊວງກະສິກໍາ ແລະ ປ່າໄມ້;
2. ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ;
3. ຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ;
4. ໜ່ວຍງານເສດຖະກິດ-ການເງິນບ້ານ

**ມາດຕາ 53 ສິດ ແລະ ໜ້າທີ່ຂອງກະຊວງກະສິກໍາ ແລະ ປ່າໄມ້**

ໃນການຄຸ້ມຄອງວຽກງານຢາປາບສັດຕູພືດ ກະຊວງກະສິກໍາ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຢາປາບສັດຕູພືດ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຢາປາບສັດຕູພືດ ໃຫ້ກາຍເປັນ ແຜນການ, ແຜນງານ, ໂຄງການ ແລະ ລະບຽບການ ພ້ອມທັງຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຢາປາບສັດຕູພືດ;
4. ຂຶ້ນທະບຽນວິຊາການຢາປາບສັດຕູພືດ, ສ້າງ ແລະ ທົບທວນຄືນບັນຊີຢາປາບສັດຕູພືດ ທີ່ອະນຸຍາດໃຫ້ນໍາໃຊ້ ແລະ ຫ້າມນໍາໃຊ້, ສ້າງແຜນການສໍາຫຼວດຄວາມສ່ຽງຢາປາບສັດຕູພືດ;

5. ຄົ້ນຄວ້າ ແລະ ພິຈາລະນາ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ ກ່ຽວກັບທີ່ປຶກສາ, ການຜະລິດ, ການບຳບັດ ແລະ ກຳຈັດ, ການວິໄຈ ແລະ ການທົດສອບຢາປາບສັດຕູພືດ;

6. ຄົ້ນຄວ້າ ແລະ ພິຈາລະນາ ການອະນຸຍາດການສົ່ງອອກ ແລະ ການອະນຸຍາດການນຳເຂົ້າຢາປາບສັດຕູພືດ ເພື່ອການສຶກສາ, ຄົ້ນຄວ້າ, ທົດລອງ, ວາງສະແດງ, ການພັດທະນາເຕັກໂນໂລຊີ, ການຊ່ວຍເຫຼືອ ຫຼື ນຳເຂົ້າໃນກໍລະນີສຸກເສີນ ເພື່ອຮັບໃຊ້ໂຄງການໃດໜຶ່ງຂອງລັດຖະບານ;

7. ສ້າງ ແລະ ຍົກລະດັບບຸກຄະລາກອນ ກ່ຽວກັບວຽກງານຢາປາບສັດຕູພືດ;

8. ແຕ່ງຕັ້ງຄະນະກຳມະການພິຈາລະນາ ການຂຶ້ນທະບຽນວິຊາການຢາປາບສັດຕູພືດ;

9. ຕິດຕາມ ແລະ ປະເມີນ ການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດ ໃນຂອບເຂດທົ່ວປະເທດ;

10. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານຢາປາບສັດຕູພືດ;

11. ພົວພັນຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຢາປາບສັດຕູພືດ;

12. ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານຢາປາບສັດຕູພືດ;

13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 54 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານຢາປາບສັດຕູພືດ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຢາປາບສັດຕູພືດ;

2. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານຢາປາບສັດຕູພືດ ໃຫ້ປະຊາຊົນ ແລະ ທຸກພາກສ່ວນ ເຂົ້າໃຈ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;

3. ຄົ້ນຄວ້າ ແລະ ນຳສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຢາປາບສັດຕູພືດ;

4. ຄົ້ນຄວ້າ ແລະ ພິຈາລະນາ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ ແລະ ໃບອະນຸຍາດອື່ນ ກ່ຽວກັບການນຳເຂົ້າ, ການຈຳໜ່າຍ ແລະ ການບໍລິການດ້ານຢາປາບສັດຕູພືດ;

5. ບຳລຸງ, ຍົກລະດັບບຸກຄະລາກອນ ຂັ້ນເມືອງ ກ່ຽວກັບວຽກງານຄຸ້ມຄອງ, ກວດກາ ແລະ ການນຳໃຊ້ຢາປາບສັດຕູພືດ;

6. ແຕ່ງຕັ້ງ ຫຼື ຍົກຍ້າຍ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ຂັ້ນແຂວງ ແລະ ຂັ້ນເມືອງ;

7. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານຢາປາບສັດຕູພືດ;

8. ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ;

9. ປະສານສົມທົບກັບ ພະແນກການ, ຫ້ອງການປົກຄອງເມືອງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 55 ສິດ ແລະ ໜ້າທີ່ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານຢາປາບສັດຕູພືດ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຢາປາບສັດຕູພືດ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ ແລະ ຂໍ້ມູນຂ່າວສານ ກ່ຽວກັບວຽກງານຢາປາບສັດຕູພືດ ໃຫ້ປະຊາຊົນ ແລະ ທຸກພາກສ່ວນ ເຂົ້າໃຈ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;

3. ຄົ້ນຄວ້າ ແລະ ນຳສະເໜີ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຢາປາບສັດຕູພືດ ໃຫ້ສອດຄ່ອງຕາມການມອບໝາຍ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ຜັນຂະຫຍາຍຄຳສັ່ງຂອງລັດຖະມົນຕີ;

4. ຝຶກອົບຮົມ ກ່ຽວກັບການຄຸ້ມຄອງ, ການນຳໃຊ້ ແລະ ການເກັບຮັກສາຢາປາບສັດຕູພືດ ໃຫ້ແກ່ຊາວກະສິກອນ;

5. ສະເໜີພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນ ພິຈາລະນາແຕ່ງຕັ້ງ ຫຼື ຍົກຍ້າຍ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ຂັ້ນເມືອງ;

6. ຝຶກອົບຮົມໃຫ້ແກ່ຜູ້ດຳເນີນທຸລະກິດຢາປາບສັດຕູພືດ ເພື່ອໃຫ້ມີຄວາມຮູ້ ກ່ຽວກັບວຽກງານຢາປາບສັດຕູພືດ;

7. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານຢາປາບສັດຕູພືດ;

8. ປະສານສົມທົບກັບພາກສ່ວນອື່ນ ໃນການຈັດຕັ້ງປະຕິບັດວຽກງານຢາປາສັດຕູພືດ;

9. ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຢາປາບສັດຕູພືດ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຢ່າງປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 56 ສິດ ແລະ ໜ້າທີ່ຂອງໜ່ວຍງານເສດຖະກິດ-ການເງິນບ້ານ**

ໃນການຄຸ້ມຄອງວຽກງານຢາປາບສັດຕູພືດ ໜ່ວຍງານເສດຖະກິດ-ການເງິນບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ໂຄສະນາ, ແນະນຳ ຂໍ້ມູນຂ່າວສານ ແລະ ເຕັກນິກການນຳໃຊ້ຢາປາບສັດຕູພືດ ໃຫ້ປະຊາຊົນເຂົ້າໃຈ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;

2. ເຂົ້າຮ່ວມຕິດຕາມ ແລະ ກວດກາ ການນຳໃຊ້ຢາປາບສັດຕູພືດ, ສິ່ງເສດເຫຼືອຢາປາບສັດຕູພືດ ແລະ ຜົນກະທົບທີ່ເກີດຂຶ້ນ;

3. ຕ້ານ ແລະ ສະກັດກັ້ນ, ແຈ້ງ ຂໍ້ມູນອຸປະຕິເຫດ, ການລັກລອບນຳເຂົ້າ, ການຈຳໜ່າຍ, ການຊື້ນສິ່ງ ແລະ ນຳໃຊ້ ຢາປາບສັດຕູພືດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

4. ເຂົ້າຮ່ວມໃນການໄກ່ເກ່ຍບັນຫາ ກ່ຽວກັບຢາປາບສັດຕູພືດພາຍໃນບ້ານ;

5. ເຂົ້າຮ່ວມກອງປະຊຸມ ສຳມະນາ, ຝຶກອົບຮົມ ເພື່ອຍົກລະດັບຄວາມຮູ້ ກ່ຽວກັບຢາປາບສັດຕູພືດ;

6. ລາຍງານການຈັດຕັ້ງປະຕິບັດວຽກງານ ກ່ຽວກັບຢາປາບສັດຕູພືດ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ, ອົງການປົກຄອງບ້ານ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 57 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ**

ໃນການຄຸ້ມຄອງວຽກງານຢາປາບສັດຕູພືດ ຂອງຂະແໜງການອື່ນ ເປັນຕົ້ນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງສາທາລະນະສຸກ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງອື່ນທີ່ກ່ຽວຂ້ອງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ຄຸ້ມຄອງ, ຕິດຕາມກວດກາວຽກງານຢາປາບສັດຕູພືດ ແລະ ຮ່ວມມືກັບ ອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ຕາມພາລະບົດບາດຂອງຕົນ.

## ໝວດທີ 8
## ການກວດກາວຽກງານຢາປາບສັດຕູພືດ

**ມາດຕາ 58 ອົງການກວດກາວຽກງານຢາປາບສັດຕູພືດ**

ອົງການກວດກາວຽກງານຢາປາບສັດຕູພືດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ແມ່ນອົງການດຽວກັບອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂອງດຳລັດສະບັບນີ້;

2. ອົງການກວດກາພາຍນອກ ແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 59 ເນື້ອໃນການກວດກາ**

ການກວດກາວຽກງານຢາປາບສັດຕູພືດ ປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບຢາປາບສັດຕູພືດ;
2. ການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ;
3. ການນຳໃຊ້ ແລະ ການດຳເນີນທຸລະກິດຢາປາບສັດຕູພືດ;

4. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານຢາປາບສັດຕູພືດ.

**ມາດຕາ 60 ຮູບການກວດກາ**

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບສຸກເສີນ.

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບສຸກເສີນ ແມ່ນການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ສຳລັບຂັ້ນຕອນ, ວິທີການກວດກາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 61 ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ**

ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ແມ່ນພະນັກງານວິຊາການປູກຝັງ ຊຶ່ງຖືກແຕ່ງຕັ້ງຢ່າງເປັນທາງການ ຈາກພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ໃຫ້ປະຕິບັດວຽກງານກວດກາຢາປາບສັດຕູພືດ ຢູ່ ຂັ້ນແຂວງ ຫຼື ຂັ້ນເມືອງ.

ສຳລັບມາດຕະຖານ ແລະ ເງື່ອນໄຂ ຂອງເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 62 ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ກວດກາຢາປາບສັດຕູພືດ**

ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່, ແນະນຳກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຢາປາບສັດຕູພືດ ໂດຍສະເພາະບັນຊີຢາປາບສັດຕູພືດຕ້ອງຫ້າມ ຕາມທີ່ກຳນົດໄວ້ໃນມາດຕາ 14 ຂອງດຳລັດສະບັບນີ້;

2. ລົງກວດກາສະຖານທີ່ຜະລິດ, ຮ້ານຈຳໜ່າຍ, ສາງເກັບມ້ຽນ, ການໂຄສະນາ, ການນຳເຂົ້າ, ການຂົນສົ່ງ, ການສົ່ງອອກ ແລະ ສະຖານທີ່ ນຳໃຊ້ຢາປາບສັດຕູພືດ;

3. ຍຶດຢາປາບສັດຕູພືດ, ອຸປະກອນນຳໃຊ້ຢາປາບສັດຕູພືດຕ້ອງຫ້າມ ແລະ ເອກະສານທີ່ກ່ຽວຂ້ອງ ກັບການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຢາປາບສັດຕູພືດ ພ້ອມທັງລາຍງານໃຫ້ອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ເພື່ອນຳໃຊ້ມາດຕະການທຳລາຍ ຫຼື ສົ່ງກັບຄືນຢາປາບສັດຕູພືດຕ້ອງຫ້າມ ດັ່ງກ່າວ ຕາມແຕ່ລະກໍລະນີ;

4. ປັບໃໝຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ທີ່ກ່ຽວກັບວຽກງານຢາປາບສັດຕູພືດ ພ້ອມທັງແຈ້ງເຕືອນຜູ້ລະເມີດ;

5. ປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອນຳໃຊ້ມາດຕະການຕ່າງໆ ທີ່ຈຳເປັນ ເປັນຕົ້ນ ການສັ່ງໃຫ້ຢຸດລົດເພື່ອກວດຄົ້ນ ຫຼື ເຂົ້າໄປໃນສະຖານທີ່ໃດໜຶ່ງທີ່ສົງໄສ ຫຼື ເປົ້າໝາຍ ວ່າມີການລະເມີດ

ກົດໝາຍ ແລະ ລະບຽບການ ກ່ຽວກັບຢາປາບສັດຕູພືດ ລວມທັງຍຶດຂອງກາງ ຫຼື ຢາປາບສັດຕູພືດຕ້ອງຫ້າມ ໄວ້ໃນການຄອບຄອງ;

6. ຮັບ, ບັນທຶກການແຈ້ງຄວາມ, ທວງເອົາເອກະສານ ແລະ ກວດກາເອກະສານ ແລະ ຄຳໃຫ້ການເບື້ອງຕົ້ນ ທີ່ເຫັນວ່າມີການລະເມີດລະບຽບການ ກ່ຽວກັບວຽກງານຢາປາບສັດຕູພືດ;

7. ເກັບຕົວຢ່າງຢາປາບສັດຕູພືດ ເພື່ອນຳໄປວິໄຈຄຸນນະພາບ ຫຼື ນຳໃຊ້ເປັນຫຼັກຖານ;

8. ສຶກສາອົບຮົມຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຢາປາບສັດຕູພືດ;

9. ສະຫຼຸບຜົນການກວດກາ ແລະ ປະກອບເອກະສານ ສົ່ງໃຫ້ອົງການຄຸ້ມຄອງວຽກງານຢາປາບສັດຕູພືດຂັ້ນຕົ້ນ ຫຼື ເຈົ້າໜ້າທີ່ສືບສວນ-ສອບສວນ ເພື່ອແກ້ໄຂ ຫຼື ດຳເນີນຄະດີ ຕາມກົດໝາຍ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

## ໝວດທີ 9
## ງົບປະມານ, ເຄື່ອງແບບ, ກາໝາຍ ແລະ ບັດ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ

### ມາດຕາ 63 ງົບປະມານ

ການເຄື່ອນໄຫວວຽກງານຢາປາບສັດຕູພືດ ແມ່ນນຳໃຊ້ງົບປະມານຂອງລັດ ຊຶ່ງອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ຕ້ອງໄດ້ຂຶ້ນແຜນງົບປະມານສະເພາະຂອງຕົນ ສະເໜີຕາມລະບົບສາຍການຈັດຕັ້ງ ແລະ ປະຕິບັດໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

### ມາດຕາ 64 ເຄື່ອງແບບ, ກາໝາຍ ແລະ ບັດ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ

ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ມີ ເຄື່ອງແບບ, ກາໝາຍ ແລະ ບັດເຈົ້າໜ້າທີ່ກວດກາຢາປາບສັດຕູພືດສະເພາະ ເພື່ອຮັບໃຊ້ເຂົ້າ ໃນການເຄື່ອນໄຫວວຽກງານຂອງຕົນ ຊຶ່ງກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ.

ໃນເວລາປະຕິບັດໜ້າທີ່ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ຕ້ອງນຸ່ງເຄື່ອງແບບ, ຕິດກາໝາຍ ແລະ ຖືບັດເຈົ້າໜ້າທີ່ກວດກາຢາປາບສັດຕູພືດທຸກຄັ້ງ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 65 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານ ດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 66 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດ ດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໄໝ, ຮັບຜິດຊອບທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

**ມາດຕາ 67 ມາດຕະການ ສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ເປັນຕົ້ນ ການລະເມີດຂໍ້ຫ້າມທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ແຕ່ຖ້າມີຄວາມຈິງໃຈລາຍງານ, ຮັບສາລະພາບຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຕົນ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນເປັນລາຍລັກອັກສອນ.

**ມາດຕາ 68 ມາດຕະການທາງວິໄນ**

ພະນັກງານ ຫຼື ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ ທີ່ລະເມີດດຳລັດສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນຕາມລະບຽບການ ເປັນຕົ້ນ ກ່າວເຕືອນຄວາມຜິດ, ໂຈະການເລື່ອນຂັ້ນ ຫຼື ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດ.

**ມາດຕາ 69 ມາດຕະການປັບໄໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກປັບໄໝຕາມກໍລະນີ ດັ່ງນີ້:

1. ຜະລິດ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ແລະ ຂົນສົ່ງຢາປາບສັດຕູພືດ ໂດຍທີ່ບໍ່ໄດ້ຮັບອະນຸຍາດ ຈະຖືກຍຶດຢາປາບສັດຕູພືດ ແລະ ຖືກປັບໄໝ ຫ້າສິບສ່ວນຮ້ອຍຂອງມູນຄ່າຢາປາບສັດຕູພືດ;

2. ນຳເຂົ້າຢາປາບສັດຕູພືດ ທີ່ໝົດອາຍຸ ຫຼື ເສຍຄຸນລັກສະນະ ຈະຖືກປັບໄໝ ຫ້າສິບສ່ວນຮ້ອຍຂອງມູນຄ່າຢາປາບສັດຕູພືດ ແລະ ໃຫ້ສົ່ງກັບຄືນປະເທດຕົ້ນທາງ;

3. ຈຳໜ່າຍ, ນຳໃຊ້ ຫຼື ມີໄວ້ໃນຄອບຄອງ ຢາປາບສັດຕູພືດ ທີ່ບໍ່ໄດ້ຂຶ້ນທະບຽນວິຊາການ ຫຼື ຢູ່ໃນບັນຊີຫ້າມນຳໃຊ້ ໃນ ສປປ ລາວ ຈະຖືກຍຶດຢາປາບສັດຕູພືດ ແລະ ປັບໄໝ ໜຶ່ງເທົ່າຂອງມູນຄ່າຢາປາບສັດຕູພືດ;

4. ປະສົມ, ຖ່ຽນຖ່າຍ, ແບ່ງຢາປາບສັດຕູພືດ ຈາກພາຊະນະບັນຈຸເດີມ, ປ່ຽນແປງການຫຸ້ມຫໍ່ ຫຼື ເນື້ອໃນ ຂອງສະຫຼາກຢາປາບສັດຕູພືດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ຈະຖືກຍຶດຢາປາບສັດຕູພືດ ແລະ ຖືກປັບໄໝ ໜຶ່ງເທົ່າຂອງມູນຄ່າຢາປາບສັດຕູພືດ;

5. ຈຳໜ່າຍຢາປາບສັດຕູພືດ ໃຫ້ຜູ້ຂາຍຍ່ອຍ ຫຼື ຜູ້ຈຳໜ່າຍອື່ນ ທີ່ບໍ່ມີໃບອະນຸຍາດດຳເນີນກິດຈະການຢາປາບສັດຕູພືດ ຈະຖືກຍຶດຢາປາບສັດຕູພືດ ແລະ ຖືກປັບໄໝ ໜຶ່ງເທົ່າຂອງມູນຄ່າຢາປາບສັດຕູພືດ;

6. ໃຫ້ບໍລິການດ້ານຢາປາບສັດຕູພືດ ໂດຍບໍ່ໄດ້ຮັບອະນຸຍາດ:

- ລະເມີດຄັ້ງທີໜຶ່ງ ຈະຖືກສຶກສາອົບຮົມ ແລະ ບັນທຶກໄວ້ໃນປຶ້ມຕິດຕາມ;
- ລະເມີດຄັ້ງທີສອງ ຈະຖືກຍຶດອຸປະກອນ, ຢາປາບສັດຕູພືດ ແລະ ຖືກປັບໄໝ ໜຶ່ງເທົ່າຂອງມູນຄ່າການບໍລິການ.